# ທະນາຄານແຫ່ງປະເທດຈີນ ຈຳກັດ, ສາຂາ ນະຄອນຫຼວງວຽງຈັນ

ເອກະສານລາຍງານການເງິນ

ສຳລັບໄລຍະແຕ່ວັນທີ 26 ມີນາ 2015 (ມື້ສ້າງຕັ້ງ) ເຖິງ ວັນທີ 31 ທັນວາ 2015

ທະນາຄານແຫ່ງປະເທດຈີນ ຈຳກັດ, ສາຂາ ນະຄອນຫຼວງວຽງຈັນ

ສາລະບານ


| | ໜ້າ |
|---|---|
| ຂໍ້ມູນທົ່ວໄປ | 1 |
| ເອກະສານລາຍງານຂອງນັກກວດສອບອິດສະຫຼະ | 2 - 3 |
| ໃບລາຍງານຜົນໄດ້ຮັບ | 4 |
| ໃບລາຍງານຜົນໄດ້ຮັບນອກການທຸລະກິດ | 5 |
| ໃບລາຍງານຖານະການເງິນ | 6 |
| ໃບລາຍງານສ່ວນປ່ຽນແປງທຶນຕົນເອງ | 7 |
| ໃບລາຍງານກະແສເງິນສົດ | 8 |
| ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ | 9 - 35 |

# ທະນາຄານແຫ່ງປະເທດຈີນ ຈຳກັດ, ສາຂາ ນະຄອນຫຼວງວຽງຈັນ

## ຂໍ້ມູນທົ່ວໄປ

### ສາຂາ

ທະນາຄານແຫ່ງປະເທດຈີນ ຈຳກັດ, ສາຂາ ນະຄອນຫຼວງວຽງຈັນ ("ສາຂາ") ແມ່ນສາຂາຂອງ ທະນາຄານແຫ່ງປະເທດຈີນ ຈຳກັດ ທີ່ໄດ້ສ້າງຕັ້ງຂຶ້ນຢູ່ໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ("ສປປ ລາວ"). ສາຂາດຳເນີນທຸລະກິດພາຍໃຕ້ໃບອະນຸຍາດດຳເນີນທຸລະກິດທະນາຄານ ສະບັບເລກທີ 06/ທຫລ ອອກໃຫ້ໂດຍ ທະນາຄານ ແຫ່ງ ສປປລາວ ("ທຫລ") ລົງວັນທີ 19 ກຸມພາ 2015.

ທຶນຈົດທະບຽນໃນເບື້ອງຕົ້ນຂອງສາຂາແມ່ນ 405,100,000,000 ກີບ. ນະວັນທີ 31 ທັນວາ 2015, ທຶນຈົດທະບຽນທີ່ຖອກແລ້ວຂອງທະນາຄານແມ່ນ 405,100,000,000 ກີບ.

ການເຄື່ອນໄຫວຕົ້ນຕໍຂອງທະນາຄານ ແມ່ນໃຫ້ບໍລິການລະດົມທຶນ ແລະ ສະໜອງເງິນກູ້ເພື່ອປັບປຸງ ແລະ ສ້າງຄວາມເຂັ້ມແຂງໃຫ້ເສດຖະກິດຂອງລາວ.

ສາຂາຕັ້ງຢູ່ອາຄານ ວຽງຈັນ ເຊັນເຕີ, ຖະໜົນຄູວຽງ, ບ້ານ ໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ.

### ຄະນະບໍລິຫານ

ສະມາຊິກຂອງຄະນະບໍລິຫານ ໃນໄລຍະແຕ່ວັນທີ 26 ມີນາ 2015 ເຖິງ ວັນທີ 31 ທັນວາ 2015 ແລະ ນະວັນທີ ຂອງເອກະສານລາຍງານການເງິນສະບັບນີ້ ລວມມີ:

| *ຊື່* | *ຕຳແໜ່ງ* | *ວັນທີແຕ່ງຕັ້ງ* |
|---|---|---|
| ທ່ານ Li Zhiyong | ຜູ້ຈັດການທົ່ວໄປ | ແຕ່ງຕັ້ງ ວັນທີ 26 ມີນາ 2015 |

### ຕົວແທນທາງດ້ານກົດໝາຍ

ຕົວແທນທາງດ້ານກົດໝາຍຂອງທະນາຄານ ໃນໄລຍະແຕ່ວັນທີ 26 ມີນາ 2015 ເຖິງ ວັນທີ 31 ທັນວາ 2015 ແລະ ນະວັນທີ ຂອງເອກະສານລາຍງານການເງິນສະບັບນີ້ ແມ່ນທ່ານ Li Zhiyong, ຜູ້ຈັດການທົ່ວໄປ.

### ນັກກວດສອບບັນຊີ

ນັກກວດສອບບັນຊີ ຂອງທະນາຄານ ແມ່ນ ບໍລິສັດ ເອີນ ແອນ ຢັງ ລາວ ຈຳກັດ.

EY
Building a better
working world

Ernst & Young Lao Limited.
6th Floor, Capital Tower
23 Singha Road, Nongbone Village
Saysettha District, Vientiane Capital, Lao PDR

Tel : +856 21 455 077
Fax: +856 21 455 078
ey.com

ເລກທີອ້າງອີງ: 61245636/ 18353158 -IFRS

# ບົດລາຍງານຂອງນັກກວດສອບອິດສະຫຼະ

**ຮຽນ: ເຈົ້າຂອງ ທະນາຄານແຫ່ງປະເທດຈີນ ຈຳກັດ, ສາຂານະຄອນຫຼວງວຽງຈັນ**

ພວກຂ້າພະເຈົ້າ ໄດ້ດຳເນີນການກວດສອບ ເອກະສານລາຍງານການເງິນຂອງ ທະນາຄານແຫ່ງປະເທດຈີນ ຈຳກັດ, ສາຂາ ນະຄອນຫຼວງ ວຽງຈັນ ("ສາຂາ") ເຊິ່ງປະກອບດ້ວຍໃບສະຫຼຸບຊັບສົມບັດ ນະວັນທີ 31 ທັນວາ 2015, ໃບລາຍງານຜົນໄດ້ຮັບ, ໃບລາຍງານສ່ວນປ່ຽນແປງທຶນຕົນເອງ ແລະ ໃບລາຍງານກະແສເງິນສົດໃນໄລຍະແຕ່ວັນທີ 26 ມີນາ 2015 ເຖິງ 31 ທັນວາ 2015 ແລະ ບົດສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ ແລະ ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນອື່ນໆ ເຊິ່ງລາຍງານ ຢູ່ໜ້າ 4 ຫາ 35.

### *ຄວາມຮັບຜິດຊອບຂອງຄະນະບໍລິຫານຕໍ່ເອກະສານລາຍງານການເງິນ*

ຄະນະບໍລິຫານຂອງທະນາຄານ ແມ່ນຮັບຜິດຊອບໃນການກະກຽມ ແລະ ນຳສະເໜີເອກະສານລາຍງານການເງິນໃຫ້ຖືກຕ້ອງ ໂດຍສອດຄ່ອງກັບມາດຕະຖານສາກົນດ້ານການລາຍງານການເງິນ, ລະບຽບການທີ່ວາງອອກໂດຍ ທະນາຄານ ແຫ່ງ ສປປ ລາວ ແລະ ການຄວບຄຸມພາຍໃນທີ່ຄະນະບໍລິຫານເຫັນວ່າມີຄວາມຈຳເປັນເພື່ອກະກຽມເອກະສານລາຍງານການເງິນທີ່ຖືກຕ້ອງ ເຊິ່ງປາສະຈາກຂໍ້ຜິດພາດອັນໃຫຍ່ຫຼວງ, ອັນເນື່ອງມາຈາກການສໍ້ໂກງ ຫລື ຍ້ອນຄວາມຜິດພາດຕ່າງໆ.

### *ຄວາມຮັບຜິດຊອບຂອງນັກກວດສອບອິດສະຫຼະ*

ຄວາມຮັບຜິດຊອບຂອງພວກຂ້າພະເຈົ້າ ແມ່ນອອກຄຳເຫັນຕໍ່ກັບເອກະສານລາຍງານການເງິນເຫຼົ່ານີ້ບົນພື້ນຖານຜົນການກວດສອບຂອງພວກຂ້າພະເຈົ້າ. ພວກຂ້າພະເຈົ້າໄດ້ດຳເນີນການກວດສອບໂດຍສອດຄ່ອງກັບມາດຕະຖານສາກົນດ້ານການກວດສອບ. ມາດຕະຖານເຫຼົ່ານັ້ນຮຽກຮ້ອງໃຫ້ພວກຂ້າພະເຈົ້າປະຕິບັດຕາມຂໍ້ບັງຄັບດ້ານຈັນຍາບັນ, ວາງແຜນ ແລະ ດຳເນີນການກວດສອບເພື່ອໃຫ້ໄດ້ຮັບຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນວ່າເອກະສານລາຍງານການເງິນ ແມ່ນປາສະຈາກຂໍ້ຜິດພາດອັນໃຫຍ່ຫຼວງ.

ການກວດສອບລວມມີ ຂັ້ນຕອນການດຳເນີນການຕ່າງໆເພື່ອເກັບກຳຫຼັກຖານຢັ້ງຢືນຄວາມຖືກຕ້ອງຂອງຈຳນວນເງິນ ແລະ ການເປີດເຜີຍຂໍ້ມູນໃນເອກະສານລາຍງານການເງິນ. ຂັ້ນຕອນການຄັດເລືອກຂຶ້ນກັບການພິຈາລະນາຂອງທີມງານນັກກວດສອບ, ເຊິ່ງລວມເຖິງການປະເມີນຄວາມສ່ຽງຂໍ້ຜິດພາດອັນໃຫຍ່ຫຼວງໃນເອກະສານລາຍງານການເງິນ ບໍ່ວ່າເກີດຈາກການສໍ້ໂກງ ຫຼື ຄວາມຜິດພາດຕ່າງໆ. ໃນການປະເມີນຄວາມສ່ຽງເຫຼົ່ານັ້ນນັກກວດສອບໄດ້ພິຈາລະນາເຖິງການຄວບຄຸມພາຍໃນທີ່ພົວພັນເຖິງການກະກຽມ ແລະ ການນຳສະເໜີເອກະສານລາຍງານການເງິນທີ່ຖືກຕ້ອງ ເພື່ອເປັນແບບແຜນຂັ້ນຕອນການກວດສອບທີ່ສົມເຫດຜົນຕາມສະພາບການ, ແຕ່ບໍ່ແມ່ນຈຸດປະສົງເພື່ອການສະແດງຄວາມເຫັນທີ່ສິ່ງຜົນເຖິງການຄວບຄຸມພາຍໃນຂອງທະນາຄານ. ການກວດສອບໄດ້ລວມເອົາທັງການປະເມີນນະໂຍບາຍການບັນຊີທີ່ໄດ້ນຳໃຊ້ ແລະ ຄວາມສົມເຫດສົມຜົນໃນການຄາດຄະເນທາງການບັນຊີທີ່ຄະນະບໍລິຫານວາງອອກ, ກໍ່ຄືການປະເມີນທັງໝົດຂອງການນຳສະເໜີເອກະສານລາຍງານການເງິນ.

ພວກຂ້າພະເຈົ້າເຊື່ອວ່າ ຫຼັກຖານທີ່ໄດ້ມາຈາກການກວດສອບນັ້ນ ແມ່ນພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານ ໃຫ້ແກ່ການອອກຄຳເຫັນຂອງພວກຂ້າພະເຈົ້າ.

Building a better
working world

***ພື້ນຖານໃນການອອກຄຳເຫັນແບບເອກະສານລາຍງານການເງິນບໍ່ຖືກຕ້ອງ.***

ເນື່ອງຈາກຂໍ້ຈຳກັດຂອງຂໍ້ມູນ ທາງຄະນະອຳນວຍການຂອງສາຂາທີ່ຍັງບໍ່ສາມາດຕອບສະໜອງການເປີດເຜີຍຂໍ້ມູນຂອງມູນຄ່າຍຸຕິທຳ ແລະ ການບໍລິຫານຄວາມສ່ຽງທາງການເງິນ ທີ່ໄດ້ກຳນົດໄວ້ພາຍໃຕ້ ມາດຕະຖານສາກົນດ້ານການລາຍງານການເງິນ ເລກທີ 7: ເຄື່ອງມືທາງການເງິນ ການເປີນເຜີຍຂໍ້ມູນ ແລະ IFRS ເລກທີ 13 “ການວັດແທກມູນຄ່າຍຸຕິທຳ”.

***ການອອກຄຳເຫັນແບບເອກະສານລາຍງານການເງິນບໍ່ຖືກຕ້ອງ***

ໃນຄຳເຫັນຂອງພວກຂ້າພະເຈົ້າ, ຍົກເວັ້ນຜົນກະທົບຂອງປະເດັນທີ່ໄດ້ລະບຸໃນວັກພື້ນຖານການອອກຄຳເຫັນແບບເອກະສານລາຍງານການເງິນທີ່ບໍ່ຖືກຕ້ອງ, ເອກະສານລາຍງານການເງິນໄດ້ນຳສະເໜີຢ່າງຖືກຕ້ອງຕາມການພິຈາລະນາຜົນກະທົບອັນສຳຄັນ, ກ່ຽວກັບຖານະການເງິນຂອງສາຂາ ນະວັນທີ 31 ທັນວາ 2015 ລວມທັງຜົນການດຳເນີນງານທາງການເງິນ ແລະ ກະແສເງິນສົດໃນໄລຍະແຕ່ວັນທີ 26 ມີນາ 2015 ເຖິງ ວັນທີ 31 ທັນວາ 2015 ໂດຍສອດຄ່ອງຕາມມາດຕະຖານສາກົນດ້ານການລາຍງານການເງິນ.

Ernst & Young Lao Ltd.

ບໍລິສັດ ເອີນ ແອນ ຢັງ ຈຳກັດ
ERNST & YOUNG LAO CO.,LTD

ນະຄອນຫຼວງວຽງຈັນ, ສປປ ລາວ

31 ມີນາ 2016

## ທະນາຄານແຫ່ງປະເທດຈີນ ຈຳກັດ, ສາຂາ ນະຄອນຫຼວງວຽງຈັນ

ໃບລາຍງານຜົນໄດ້ຮັບ

ສຳລັບໄລຍະແຕ່ວັນທີ 26 ມີນາ 2015 ເຖິງ 31 ທັນວາ 2015

| | ບົດອະທິບາຍເລກທີ | *ສຳລັບໄລຍະ ແຕ່ 26 ມີນາ 2015 ເຖິງ 31 ທັນວາ 2015 ລ້ານກີບ* |
|---|---|---|
| ລາຍຮັບດອກເບ້ຍ ແລະ ທີ່ຄ້າຍຄືດອກເບ້ຍ | 3 | 6,553 |
| ລາຍຈ່າຍດອກເບ້ຍ ແລະ ທີ່ຄ້າຍຄືດອກເບ້ຍ | 4 | (1,505) |
| **ລາຍຮັບສຸດທິ ຈາກດອກເບ້ຍ ແລະ ຄ້າຍຄືດອກເບ້ຍ** | | **5,048** |
| ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການ | 5 | 180 |
| ລາຍຈ່າຍຄ່າທຳນຽມ ແລະ ຄ່າບໍລິການ | | (57) |
| **ລາຍຮັບສຸດທິຈາກ ຄ່າທຳນຽມ ແລະ ຄ່າບໍລິການ** | | **123** |
| ຂາດທຶນສຸດທິຈາກການຊື້ຂາຍເງິນຕາ | 6 | 394 |
| **ລວມຍອດລາຍຮັບຈາກການດຳເນີນງານ** | | **5,565** |
| ລາຍຈ່າຍຈາກໜີ້ເສຍ | 13 | (979) |
| **ລວມຍອດລາຍຈ່າຍຈາກການດຳເນີນງານ** | | **4,586** |
| ລາຍຈ່າຍກ່ຽວກັບພະນັກງານ | 7 | (8,405) |
| ຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າ | | (2,475) |
| ລາຍຈ່າຍອື່ນໆຈາກການດຳເນີນງານ | 8 | (9,124) |
| **ລວມຍອດລາຍຈ່າຍຈາກການດຳເນີນງານ** | | **(20,004)** |
| **ຂາດທຶນກ່ອນອາກອນ** | | **(15,418)** |
| ລາຍຈ່າຍອາກອນກຳໄລ | 19 | - |
| **ຂາດທຶນພາຍໃນໄລຍະ** | | **(15,418)** |

ກະກຽມໂດຍ:

ທ່ານ Li Zhiwei
ຜູ້ຈັດການບໍລິຫານການເງິນ ແລະ ໜ່ວຍບໍລິການການດຳເນີນງານ

ອະນຸມັດໂດຍ:

ທ່ານ Li Zhiyong
ຜູ້ຈັດການທົ່ວໄປ

ນະຄອນຫຼວງວຽງຈັນ, ສປປ ລາວ

31 ມີນາ 2016

# ທະນາຄານແຫ່ງປະເທດຈີນ ຈຳກັດ, ສາຂາ ນະຄອນຫຼວງວຽງຈັນ

ໃບລາຍງານຜົນໄດ້ຮັບນອກການທຸລະກິດ
ສຳລັບໄລຍະແຕ່ວັນທີ 26 ມີນາ 2015 ເຖິງ ວັນທີ 31 ທັນວາ 2015

| | ບົດອະທິບາຍເລກທີ | 2015<br>ລ້ານກີບ |
|---|---|---|
| **ຂາດທຶນພາຍໃນໄລຍະ** | | **(15,418)** |
| **ລາຍຮັບອື່ນໆນອກການທຸລະກິດຫຼັງຫັກອາກອນ** | | **-** |
| **ລວມຍອດຜົນໄດ້ຮັບນອກການທຸລະກິດພາຍໃນປີ, (ຫຼັງຫັກອາກອນ)** | | **(15,418)** |

ກະກຽມໂດຍ:

ທ່ານ Li Zhiwei
ຜູ້ຈັດການບໍລິຫານການເງິນ ແລະ ໜ່ວຍບໍລິການການດຳເນີນງານ

ອະນຸມັດໂດຍ:

ທ່ານ Li Zhiyong
ຜູ້ຈັດການທົ່ວໄປ

ນະຄອນຫຼວງວຽງຈັນ, ສປປ ລາວ

31 ມີນາ 2016

# ທະນາຄານແຫ່ງປະເທດຈີນ ຈຳກັດ, ສາຂາ ນະຄອນຫຼວງວຽງຈັນ

ໃບລາຍງານຖານະການເງິນ
ນະວັນທີ 31 ທັນວາ 2015

| | *ບົດອະທິບາຍ ເລກທີ* | *31 ທັນວາ 2015 ລ້ານກີບ* |
|---|---|---|
| **ຊັບສິນ** | | |
| ເງິນສົດ ແລະ ເງິນຝາກຢູ່ ທຫລ | 9 | 372,123 |
| ໜີ້ຕ້ອງຮັບຈາກທະນາຄານອື່ນ | 10 | 37,777 |
| ເງິນກູ້ໃຫ້ແກ່ລູກຄ້າ | 12 | 97,180 |
| ຫຼັກຊັບຖືໄວ້ຈົນຄົບກຳນົດ | 11 | 411,325 |
| ຊັບສິນບັດ ແລະ ອຸປະກອນ | 14 | 13,072 |
| ຊັບສິນອື່ນໆ | 15 | 19,669 |
| **ລວມຍອດຊັບສິນ** | | **951,146** |
| **ໜີ້ສິນ** | | |
| ໜີ້ຕ້ອງສົ່ງໃຫ້ກັບທະນາຄານອື່ນ | 16 | 438,778 |
| ໜີ້ຕ້ອງສົ່ງໃຫ້ລູກຄ້າ | 17 | 73,130 |
| ໜີ້ສິນອື່ນໆ | 18 | 49,556 |
| **ລວມຍອດໜີ້ສິນ** | | **561,464** |
| **ທຶນ** | | |
| ທຶນຈົດທະບຽນຖອກແລ້ວ | 20 | 405,100 |
| ຂາດທຶນສະສົມ | | (15,418) |
| **ລວມຍອດທຶນ** | | **389,682** |
| **ລວມຍອດໜີ້ສິນ ແລະ ທຶນ** | | **951,146** |

ກະກຽມໂດຍ:

ທ່ານ Li Zhiwei
ຜູ້ຈັດການບໍລິຫານການເງິນ ແລະ ໜ່ວຍບໍລິການ
ການດຳເນີນງານ

ອະນຸມັດໂດຍ:

ທ່ານ Li Zhiyong
ຜູ້ຈັດການທົ່ວໄປ

ນະຄອນຫຼວງວຽງຈັນ, ສປປ ລາວ

31 ມີນາ 2016

# ທະນາຄານແຫ່ງປະເທດຈີນ ຈຳກັດ, ສາຂາ ນະຄອນຫຼວງວຽງຈັນ

ໃບລາຍງານການປ່ຽນແປງທຶນຕົນເອງ
ສຳລັບໄລຍະແຕ່ວັນທີ 26 ມີນາ 2015 ເຖິງ ວັນທີ 31 ທັນວາ 2015

| | *ທຶນຈົດທະບຽນຖອກແລ້ວ* | *ຂາດທຶນສະສົມ* | *ລວມ* |
|---|---|---|---|
| | *ລ້ານກີບ* | *ລ້ານກີບ* | *ລ້ານກີບ* |
| **ຍອດເຫຼືອນະວັນທີ 26 ມີນາ 2015** | **-** | **-** | **-** |
| ທຶນຈົດທະບຽນເພີ່ມເຕີມໃນໄລຍະ | 405,100 | - | 405,100 |
| ຂາດທຶນສຸດທິໃນໄລຍະ | - | (15,418) | (15,418) |
| **ຍອດເຫຼືອສຸດທິນະວັນທີ 31 ທັນວາ 2015** | **405,100** | **(15,418)** | **389,682** |

ກະກຽມໂດຍ:

ທ່ານ Li Zhiwei
ຜູ້ຈັດການບໍລິຫານການເງິນ ແລະ ໜ່ວຍບໍລິການການດຳເນີນງານ

ອະນຸມັດໂດຍ:

ທ່ານ Li Zhiyong
ຜູ້ຈັດການທົ່ວໄປ

ນະຄອນຫຼວງວຽງຈັນ, ສປປ ລາວ

31 ມີນາ 2016

## ທະນາຄານແຫ່ງປະເທດຈີນ ຈໍາກັດ, ສາຂາ ນະຄອນຫຼວງວຽງຈັນ

ໃບລາຍງານກະແສເງິນສົດ
ສໍາລັບໄລຍະແຕ່ວັນທີ 26 ມີນາ 2015 ເຖິງ ວັນທີ 31 ທັນວາ 2015

| | *ບົດອະທິບາຍເລກທີ* | *2015*<br>*ລ້ານກີບ* |
|---|---|---|
| **ກະແສເງິນສົດຈາກກິດຈະກໍາການດໍາເນີນງານ** | | |
| **ຂາດທຶນສຸດທິກ່ອນອາກອນ** | | **(15,418)** |
| *ດັດແກ້ສໍາລັບ:* | | |
| ຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມຫັກເປັນລາຍຈ່າຍໃນປີ | | 2,475 |
| ລາຍຈ່າຍຈາກໜີ້ເສຍ | | 979 |
| (ເພີ່ມຂຶ້ນ)/ຫຼຸດລົງ ຂອງຊັບສິນຈາກການດໍາເນີນງານ | | |
| ຍອດເຫຼືອໜີ້ທີ່ມີກັບທະນາຄານອື່ນ | | (32,365) |
| ເງິນກູ້ ແລະ ເງິນລ່ວງໜ້າໃຫ້ກັບລູກຄ້າ | | (98,159) |
| ຊັບສິນອື່ນໆ | | (430,996) |
| ເພີ່ມຂຶ້ນ/(ຫຼຸດລົງ) ຂອງໜີ້ສິນຈາກການດໍາເນີນງານ | | |
| ເງິນຝາກ ແລະ ເງິນກູ້ຢືມຈາກທະນາຄານອື່ນ | | 438,778 |
| ເງິນຝາກຂອງລູກຄ້າ ແລະ ທີ່ຕ້ອງສົ່ງໃຫ້ລູກຄ້າ | | 73,130 |
| ໜີ້ສິນອື່ນໆ | | 49,556 |
| **ກະແສເງິນສົດສຸດທິຈາກກິດຈະກໍາການດໍາເນີນງານ** | | **(12,020)** |
| **ກະແສເງິນສົດກິດຈະກໍາການລົງທຶນ** | | |
| ຊື້ຊັບສິນບັດ ແລະ ອຸປະກອນ ແລະ ຊັບສິນບັດຄົງທີ່ບໍ່ມີຕົວຕົນອື່ນໆ | | (15,547) |
| **ກະແສເງິນສົດສຸດທິທີ່ໄດ້ນໍາໃຊ້ເຂົ້າໃນກິດຈະກໍາການລົງທຶນ** | | **(15,547)** |
| **ກະແສເງິນສົດຈາກກິດຈະກໍາທາງການເງິນ** | | |
| ການປະກອບທຶນ | | 405,100 |
| **ກະແສເງິນສົດສຸດທິຈາກກິດຈະກໍາທາງການເງິນ** | | **405,100** |
| **ເພີ່ມຂຶ້ນສຸດທິ ຂອງເງິນສົດ ແລະ ທຽບເທົ່າເງິນສົດ** | | **377,533** |
| **ເງິນສົດ ແລະ ທຽບເທົ່າເງິນສົດຕົ້ນປີ** | | - |
| **ຜົນກະທົບຈາກຜົດດ່ຽງເງິນຕາ** | | - |
| **ເງິນສົດ ແລະ ທຽບເທົ່າເງິນສົດທ້າຍປີ** | **21** | **377,533** |

ກະກຽມໂດຍ:

ທ່ານ Li Zhiwei
ຜູ້ຈັດການບໍລິຫານການເງິນ ແລະ ໜ່ວຍບໍລິການການດໍາເນີນງານ

ນະຄອນຫຼວງວຽງຈັນ, ສປປ ລາວ

31 ມີນາ 2016

ອະນຸມັດໂດຍ:

ທ່ານ Li Zhiyong
ຜູ້ຈັດການທົ່ວໄປ

## 1. ຂໍ້ມູນກ່ຽວກັບທະນາຄານ

*ການສ້າງຕັ້ງ ແລະ ການດຳເນີນທຸລະກິດ*

ທະນາຄານແຫ່ງປະເທດຈີນ ຈຳກັດ, ສາຂາ ນະຄອນຫຼວງວຽງຈັນ ("ສາຂາ") ແມ່ນສາຂາຂອງ ທະນາຄານແຫ່ງປະເທດຈີນ ຈຳກັດ ທີ່ໄດ້ສ້າງຕັ້ງຂຶ້ນຢູ່ໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ("ສປປ ລາວ"). ສາຂາດຳເນີນທຸລະກິດພາຍໃຕ້ ໃບອະນຸຍາດດຳເນີນທຸລະກິດທະນາຄານ ສະບັບເລກທີ 06/ທຫລ ເຊິ່ງອອກໃຫ້ໂດຍ ທະນາຄານ ແຫ່ງ ສປປລາວ ("ທຫລ") ລົງວັນທີ 19 ກຸມພາ 2015.

ການເຄື່ອນໄຫວຕົ້ນຕໍຂອງທະນາຄານ ແມ່ນໃຫ້ບໍລິການລະດົມທຶນ ແລະ ຕອບສະໜອງເງິນກູ້ເພື່ອປັບປຸງ ແລະ ສ້າງຄວາມເຂັ້ມແຂງໃຫ້ເສດຖະກິດຂອງລາວ.

**ທຶນຈົດທະບຽນ**

ທຶນຈົດທະບຽນໃນເບື້ອງຕົ້ນຂອງສາຂາແມ່ນ 405,100,000,000 ກີບ. ນະວັນທີ 31 ທັນວາ 2015, ທຶນຈົດທະບຽນທີ່ຖອກແລ້ວຂອງທະນາຄານແມ່ນ 405,100,000,000 ກີບ.

**ຄະນະບໍລິຫານ**

ສະມາຊິກຂອງຄະນະບໍລິຫານ ໃນໄລຍະແຕ່ວັນທີ 26 ມີນາ 2015 ເຖິງ ວັນທີ 31 ທັນວາ 2015 ແລະ ນະວັນທີ ຂອງເອກະສານລາຍງານການເງິນສະບັບນີ້ ລວມມີ:

| *ຊື່* | *ຕຳແໜ່ງ* | *ວັນທີແຕ່ງຕັ້ງ* |
|---|---|---|
| ທ່ານ Li Zhiyong | ຜູ້ຈັດການທົ່ວໄປ | ແຕ່ງຕັ້ງ ວັນທີ 26 ມີນາ 2015 |

*ທີ່ຕັ້ງ*

ສາຂາຕັ້ງຢູ່ຕຶກ ວຽງຈັນ ເຊັນເຕີ, ຖະໜົນຄູວຽງ, ບ້ານ ໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ.

*ພະນັກງານ*

ນະວັນທີ 31 ທັນວາ 2015 ພະນັກງານຢູ່ສາຂາ ມີທັງໝົດ 20 ຄົນ.

## 2. ນະໂຍບາຍການບັນຊີ

### 2.1. *ພື້ນຖານການກະກຽມ*

ສາຂາໄດ້ກະກຽມເອກະສານລາຍງານການເງິນຂອງຕົນອີງຕາມມາດຕະຖານສາກົນດ້ານການລາຍງານການເງິນ. ເອກະສານລາຍງານການເງິນໄດ້ຖືກກະກຽມບົນພື້ນຖານຂໍ້ມູນຕົວເລກຂອງປີຜ່ານມາ, ຍົກເວັ້ນບັນດາລາຍການທີ່ໄດ້ເປີດເຜີຍໃນບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນອື່ນໆ.

ທະນາຄານດຳເນີນການບັນທຶກບັນຊີ ເປັນສະກຸນເງິນ ກີບ ແລະ ນຳສະເໜີເອກະສານລາຍງານການເງິນເປັນຫົວໜ່ວຍລ້ານກີບ.

### 2.2. *ປີການບັນຊີ*

ປີການບັນຊີຂອງສາຂາແມ່ນ ເລີ່ມແຕ່ວັນທີ 26 ມີນາ 2015 (ມື້ສ້າງຕັ້ງ) ແລະ ສິ້ນສຸດນະວັນທີ 31 ທັນວາ 2015.

ປີການບັນຊີຕໍ່ມາຂອງສາຂາແມ່ນ ເລີ່ມຈາກວັນທີ 1 ມັງກອນ ແລະ ສິ້ນສຸດ ວັນທີ 31 ທັນວາ.

### 2.3 *ການນຳສະເໜີເອກະສານລາຍງານການເງິນ*

ສາຂາໄດ້ນຳສະເໜີໃບລາຍງານຖານະການເງິນຢ່າງກວ້າງຂວາງເພື່ອໃຫ້ສອດຄ່ອງກັບສະພາບຄ່ອງ, ຊັບສິນ ແລະ ໜີ້ສິນ ທາງການເງິນຈະຖືກຫັກລ້າງກັນ. ມູນຄ່າສຸດທິຈະຖືກສະແດງໃນໃບລາຍງານຖານະການເງິນ ກໍ່ຕໍ່ເມື່ອມີກົດລະບຽບທີ່ກຳນົດໄວ້ໃຫ້ຫັກລ້າງມູນຄ່າມື່ຖືກຮັບຮູ້ ແລະ ສາຂາມີຈຸດປະສົງທີ່ຈະຫັກລ້າງອີງຕາມມູນຄ່າສຸດທິ ຫຼື ຈະນຳໃຊ້ວິທີຮັບຮູ້ຊັບສິນ ແລະ ສະສາງໜີ້ສິນໄປພ້ອມກັນ. ລາຍຮັບ ແລະ ລາຍຈ່າຍບໍ່ໄດ້ຫັກລ້າງກັນໃນໃບລາຍງານຜົນໄດ້ຮັບ ຍົກເວັ້ນໃນກໍລະນີມີຂໍ້ກຳນົດ ຫຼື ການອະນຸຍາດຈາກມາດຕະຖານບັນຊີໃດໜຶ່ງ ແລະ ອີງໃສ່ນະໂຍບາຍບັນຊີຂອງສາຂາທີ່ໄດ້ເປີດເຜີຍເປັນບົດອະທິບາຍຊ້ອນທ້າຍ.

### 2.4 *ການຄາດຄະເນ ແລະ ຂໍ້ສົມມຸດຖານການບັນຊີທີ່ສຳຄັນ*

ການກະກຽມເອກະສານລາຍງານການເງິນ ຂອງສາຂາໄດ້ຮຽກຮ້ອງໃຫ້ຄະນະອຳນວຍການຕ້ອງໃຊ້ການປະເມີນ ແລະ ສົມມຸດຖານ ເຊິ່ງຈະສົ່ງຜົນຕໍ່ຕົວເລກທີ່ໄດ້ສະແດງໃນລາຍຮັບ, ລາຍຈ່າຍ, ຊັບສິນ ແລະ ໜີ້ສິນ, ແລະ ຂໍ້ມູນທີ່ໄດ້ຖືກເປີດເຜີຍພ້ອມກັບເອກະສານລາຍງານການເງິນ, ເປັນຕົ້ນແມ່ນການເປີດເຜີຍໜີ້ສິນທີ່ເກີດຂຶ້ນໂດຍບັງເອີນ ຖ້າພື້ນຖານຂອງສົມມຸດຖານ ແລະ ການຄາດຄະເນທີ່ນຳໃຊ້ບໍ່ມີຄວາມແນ່ນອນ ຈະສົ່ງຜົນກະທົບຕໍ່ຜົນໃນພາຍຫລັງ ເຊິ່ງຕ້ອງຮຽກຮ້ອງໃຫ້ມີການດັດແກ້ທີ່ຈະສົ່ງຜົນກະທົບອັນໃຫ່ຍຫຼວງຕໍ່ກັບມູນຄ່າທີ່ຍັງເຫຼືອຕາມບັນຊີຂອງຊັບສິນ ຫຼື ໜີ້ສິນ ໃນອານາຄົດ.

ບັນດາສົມມຸດຖານທີ່ສຳຄັນກ່ຽວກັບອານາຄົດ ແລະ ແຫຼ່ງຂໍ້ມູນອື່ນໆທີ່ສຳຄັນໃນການປະເມີນຄວາມບໍ່ແນ່ນອນ ນະວັນທີຂອງການລາຍງານເງິນເຊິ່ງຖືວ່າມີຄວາມສ່ຽງທີ່ສຳຄັນທີ່ຈະກໍ່ໃຫ້ເກີດການດັດແກ້ທີ່ຈະສົ່ງຜົນກະທົບອັນໃຫຍ່ຫຼວງຕໍ່ກັບມູນຄ່າທີ່ຍັງເຫຼືອຕາມບັນຊີຂອງຊັບສິນ ແລະ ໜີ້ສິນພາຍໃນປີການບັນຊີຕໍ່ໄປ ແມ່ນໄດ້ອະທິບາຍຂ້າງລຸ່ມ. ສາຂາໄດ້ອີງໃສ່ສົມມຸດຖານ ແລະ ການຄາດຄະເນຕາມປັດໄຈທີ່ມີຢູ່ທົ່ວໄປເມື່ອເອກະສານລາຍງານການເງິນໄດ້ຖືກກະກຽມ. ເຖິງຢ່າງໃດກໍ່ຕາມ, ເງື່ອນໄຂທີ່ມີຢູ່ ແລະ ການຄາດຄະເນທີ່ຈະສົ່ງຜົນໃຫ້ມີການປ່ຽນແປງໃນອະນາຄົດເຫຼົ່ານີ້ ອາດຈະມີການປ່ຽນແປງເນື່ອງຈາກການປ່ຽນແປງຂອງຕະຫຼາດ ຫຼື ເງື່ອນໄຂໃດໜຶ່ງທີ່ຢູ່ເໜືອການຄວບຄຸມຂອງສາຂາ, ເຊິ່ງການປ່ຽນແປງດັ່ງກ່າວ ໄດ້ສະແດງໃນຂໍ້ສົມມຸດຖານເມື່ອເກີດຂຶ້ນຈິງ

## 2. ນະໂຍບາຍການບັນຊີ (ຕໍ່)

### 2.4 *ການຄາດຄະເນ ແລະ ຂໍ້ສົມມຸດຖານການບັນຊີທີ່ສຳຄັນ (ຕໍ່)*

#### 2.4.1 *ຄວາມສືບເນື່ອງໃນການດຳເນີນທຸລະກິດ*

ຄະນະອຳນວຍການໄດ້ປະເມີນຄວາມອາດສາມາດຂອງສາຂາໃນການສືບຕໍ່ດຳເນີນທຸລະກິດ ແລະ ມີຄວາມເພິ່ງພໍໃຈວ່າ ສາຂາ ມີແຫລ່ງຊັບພະຍາກອນເພື່ອສືບຕໍ່ ໃນການດຳເນີນທຸລະກິດໃນອະນາຄົດ ທີ່ຄາດຄະເນໄວ້. ນອກຈາກນີ້, ຄະນະອຳນວຍການ ຍັງບໍ່ພົບເຫັນສິ່ງຜິດປົກກະຕິອັນໃຫຍ່ຫຼວງໃດໆ ທີ່ອາດຈະສົ່ງຜົນກະທົບທີ່ສຳຄັນຕໍ່ຄວາມສາມາດຂອງສາຂາ ໃນການດຳເນີນ ທຸລະກິດຢ່າງຕໍ່ເນື່ອງ. ດັ່ງນັ້ນ, ເອກະສານລາຍງານການເງິນຍັງສືບຕໍ່ຖືກກະກຽມບົນພື້ນຖານຄວາມສືບເນື່ອງໃນການດຳເນີນ ທຸລະກິດ.

#### 2.4.2 *ການຫັກຄ່າເສື່ອມ ສຳລັບເງິນກູ້ ແລະ ເງິນລ່ວງໜ້າ*

ສາຂາໄດ້ທົບທວນຄືນ ແຕ່ລະເງິນກູ້ ແລະ ເງິນລ່ວງໜ້າທີ່ສຳຄັນ ນະວັນທີລາຍງານ ເພື່ອປະເມີນວ່າການຫັກມູນຄ່າເສື່ອມ ຄວນຈະຖືກບັນທຶກລົງໃນໃບລາຍງານຜົນໄດ້ຮັບ ຫຼື ບໍ່. ໂດຍສະເພາະແລ້ວການພິຈາລະນາຂອງຄະນະອຳນວຍການຮຽກຮ້ອງ ໃຫ້ມີການຄາດຄະເນຈຳນວນ ແລະ ໄລຍະເວລາຂອງກະແສເງິນສົດໃນອະນາຄົດເມື່ອກຳນົດມູນຄ່າເສື່ອມ. ໃນການປະເມີນ ເຫຼົ່ານີ້ແມ່ນຂຶ້ນການການຄາດຄະເນທາງດ້ານປັດໃຈ ແລະ ຜົນໄດ້ຮັບຕົວຈິງທີ່ອາດຈະແຕກຕ່າງ ເຊິ່ງເປັນຜົນໃຫ້ມີການ ປ່ຽນແປງໃນອານາຄົດຕໍ່ກັບການຫັກມູນຄ່າເສື່ອມ.

ບັນດາລາຍການເງິນກູ້ ແລະ ເງິນລ່ວງທີ່ຖືກປະເມີນແຕ່ລະລາຍການ ແລະ ເຫັນວ່າຈະບໍ່ມີການເສື່ອມຄ່າ ແລະ ແຕ່ລະເງິນກູ້ ແລະ ເງິນລ່ວງໜ້າທີ່ສຳຄັນຈະຖືກປະເມີນໂດຍລວມ ອີງຕາມປະເພດຂອງກຸ່ມຊັບສິນທີ່ມີຄວາມສ່ຽງໃນລັກສະນະຄ້າຍຄື ກັນ, ເພື່ອກຳນົດວ່າສົມຄວນສ້າງຄັງແຮ ຫຼື ບໍ່ ໃນກໍລະນີເກີດການຂາດທຶນ ເຊິ່ງມີຫຼັກຖານເປັນພາວະວິໄສ ແຕ່ວ່າຜົນກະທົບ ຍັງບໍ່ຊັດເຈນ.

### 2.5 *ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ*

#### 2.5.1 *ການແລກປ່ຽນລາຍການທີ່ເປັນເງິນຕາຕ່າງປະເທດ*

ລາຍການທີ່ເປັນເງິນຕາຕ່າງປະເທດໂດຍພື້ນຖານແມ່ນຖືກບັນທຶກໂດຍການນຳໃຊ້ອັດຕາແລກປ່ຽນທັນທີໃນມື້ທີ່ລາຍການ ດັ່ງກ່າວເກີດຂຶ້ນ. ຊັບສິນ ແລະ ໜີ້ສິນ ທາງການເງິນທີ່ເປັນສະກຸນເງິນຕາຕ່າງປະເທດໄດ້ຖືກແລກປ່ຽນຄືນເປັນເງິນກີບດ້ວຍ ອັດຕາແລກທັນທີປ່ຽນ ນະວັນທີລາຍງານ (ເບິ່ງລາຍການອັດຕາແລກປ່ຽນຂອງເງິນຕາຕ່າງປະເທດຕໍ່ເງິນກີບ ນະວັນທີ 31 ທັນວາ 2015 ໃນບົດອະທິບາຍຊ້ອນທ້າຍເລກທີ 28) ສ່ວນຜິດດ່ຽງຈາກອັດຕາແລກປ່ຽນນາມມະທຳທີ່ເພີ່ມຂຶ້ນຈາກການ ປ່ຽນບັນດາຊັບສິນ ແລະ ໜີ້ສິນທາງການເງິນທີ່ຢູ່ໃນຍອດເຫຼືອເງິນແມ່ນຖືກຮັບຮູ້ໃນໃບລາຍງານຜົນໄດ້ຮັບ.

#### 2.5.2 *ເຄື່ອງມືທາງການເງິນ - ການຮັບຮູ້ເບື້ອງຕົ້ນ ແລະ ການຕີມູນຄ່າຕາມພາຍຫລັງ*

##### 2.5.2.1 *ວັນທີຂອງການຮັບຮູ້*

ຊັບສິນ ແລະ ໜີ້ສິນການເງິນທັງໝົດທີ່ຖືກຮັບຮູ້ໃນເບື້ອງຕົ້ນໃນມື້ທີ່ຊື້ຂາຍເຊັ່ນ: ມື້ທີ່ສາຂາກາຍເປັນພາກສ່ວນໜຶ່ງຂອງການ ໃຫ້ຄຳໝັ້ນສັນຍາຫັກຄ່າເສື່ອມທາງດ້ານເຄື່ອງມື. ນີ້ລວມທັງ "ວິທີການຂາຍປົກກະຕິ", ການຊື້ ຫລື ການຂາຍຊັບສິນການເງິນ ທີ່ຮຽກຮ້ອງໃຫ້ມີການນຳສົ່ງຊັບສິນໃຫ້ທັນຕາມກຳນົດເວລາ ໂດຍປົກກະຕິແລ້ວຖືກກຳນົດໂດຍລະບຽບ ຫຼື ສັນຍາໃນທ້ອງ ຕະຫຼາດ.

**2. ນະໂຍບາຍການບັນຊີ (ຕໍ່)**

***2.5 ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)***

*2.5.2 ເຄື່ອງມືທາງການເງິນ - ການຮັບຮູ້ເບື້ອງຕົ້ນ ແລະ ການຕີມູນຄ່າຕາມພາຍຫລັງ (ຕໍ່)*

*2.5.2.2 ການຕີມູນຄ່າເບື້ອງຕົ້ນຂອງເຄື່ອງມືທາງການເງິນ*

ການຈັດປະເພດເຄື່ອງມືທາງການເງິນຕາມການຮັບຮູ້ເບື້ອງຕົ້ນແມ່ນຂຶ້ນກັບຈຸດປະສົງ ແລະ ທັກສະໃຈຂອງຄະນະອຳນວຍການຕໍ່ ເຄື່ອງມືທາງການເງິນທີ່ຕ້ອງການ ແລະ ຄວາມຕັ້ງໃຈຂອງຄະນະອຳນວຍການໃນຄວາມຕ້ອງການເຄື່ອງມືເຫລົ່ານັ້ນ. ເຄື່ອງມືທາງການເງິນທັງໝົດແມ່ນຖືກຕີມູນຄ່າຍຸຕິທຳເບື້ອງຕົ້ນ, ຍົກເວັ້ນໃນກໍລະນີຂອງຊັບສິນທາງການເງິນ ແລະ ໜີ້ສິນທາງການເງິນທີ່ຖືກບັນທຶກຕາມມູນຄ່າຍຸຕິທຳໂດຍຜ່ານກຳໄລ ຫຼື ຂາດທຶນ.

*2.5.2.3 "ມື້ທີ 1" ກຳໄລ ຫລື ຂາດທຶນ*

ເມື່ອລາຄາໃນມື້ທີ່ການເຄື່ອນໄຫວເກີດຂຶ້ນ ຕ່າງຈາກມູນຄ່າຍຸຕິທຳຂອງລາຄາຕາມທ້ອງຕະຫຼາດໃນປັດຈຸບັນຂອງເຄື່ອງມືການເງິນອັນດຽວກັນ ຫລື ອີງຕາມມູນຄ່າທາງວິຊາການທີ່ໄດ້ສຳຫຼວດໃນຕະຫຼາດ, ສາຂາຮັບຮູ້ສ່ວນຜິດດ່ຽງລະຫວ່າງລາຄາໃນມື້ທີ່ການເຄື່ອນໄຫວເກີດຂຶ້ນ ແລະ ມູນຄ່າຍຸດຕິທຳ (" ມື້ທີ 1 "ກຳໄລ ຫລື ຂາດທຶນ) ໃນ "ລາຍຮັບສຸດທິຈາກການຄ້າ. ໃນກໍລະນີທີ່ມູນຄ່າຍຸຕິທຳຖືກກຳນົດຕາມຂໍ້ມູນທີ່ບໍ່ໄດ້ຖືກສຳຫຼວດ, ສ່ວນຜິດດ່ຽງລະຫວ່າງລາຄາໃນມື້ທີ່ການເຄື່ອນ ໄຫວເກີດຂຶ້ນ ແລະ ມູນຄ່າຈຳລອງ ແມ່ນຈະຖືກຮັບຮູ້ໃນໃບລາຍງານຜົນໄດ້ຮັບກໍ່ຕໍ່ເມື່ອຂໍ້ມູນທີ່ນຳໃຊ້ສາມາດສັງເກດເຫັນໄດ້ຈະແຈ້ງ ຫຼື ເມື່ອເຄື່ອງມືທາງການເງິນຖືກສະສາງອອກຈາກບັນຊີ.

*2.5.2.4 ຕ້ອງຮັບຈາກທະນາຄານອື່ນ ແລະ ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ*

"ໜີ້ຕ້ອງຮັບຈາກທະນາຄານອື່ນ" ແລະ "ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ" , ລວມມີ ຊັບສິນການເງິນທີ່ບໍ່ແມ່ນອານຸພັນທີ່ລາຍຈ່າຍຄົງທີ່ ຫຼື ກຳນົດຂຶ້ນທີ່ບໍ່ໄດ້ກຳນົດລາຄາໃນຕະຫຼາດ, ນອກເໜືອຈາກ:

- ສາຂາມີຄວາມຕັ້ງໃຈທີ່ຈະຂາຍທັນທີທັນໃດ ຫຼື ສາຂາສາມາດຂາຍໄດ້ໃນເວລາທີ່ສັ້ນ, ເມື່ອການຮັບຮູ້ເບື້ອງຕົ້ນ, ກຳນົດຕາມມູນຄ່າຍຸຕິທຳຜ່ານກຳໄລ ຫລື ຂາດທຶນ;
- ສາຂາຮັບຮູ້ມູນຄ່າເບື້ອງຕົ້ນ ແລະ ກຳນົດມູນຄ່າຂາຍ;
- ສາຂາອາດຈະບໍ່ສາມາດເກັບຄືນຈາກການລົງທຶນທັງໝົດ, ເນື່ອງຈາກການເສື່ອມຄ່າຂອງສິນເຊື່ອ.

ຫຼັງຈາກການປະເມີນເບື້ອງຕົ້ນ, ມູນຄ່າ "ໜີ້ຕ້ອງສົ່ງໃຫ້ທະນາຄານອື່ນ "ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ" ຈະຖືກປະເມີນຕາມວິທີການຫຼຸດຕົ້ນທຶນລົງ ໂດຍໃຊ້ອັດຕາດອກເບ້ຍທີ່ແທ້ຈິງລົບໃຫ້ ສ່ວນຫຼຸດຄ່າເສື່ອມມູນຄ່າ. ມູນຄ່າທີ່ໄດ້ຈາກວິທີການຫຼຸດຕົ້ນທຶນລົງ ຈະຖືກຄິດໄລ່ໂດຍລວມເອົາບັນດາສ່ວນຫຼຸດ ຫຼື ຄ່າທຳນຽມທີ່ນຳໃຊ້ເພື່ອເຂົ້າຄອບຄອງ ແລະ ຄ່າບໍລິການ ແລະ ຕົ້ນທຶນທີ່ເປັນສ່ວນປະກອບຂອງອັດຕາດອກເບ້ຍຕົວຈິງ. ຄ່າເສື່ອມຈະຖືກລວມຢູ່ໃນ "ລາຍຮັບດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ" ໃນໃບລາຍງານຜົນໄດ້ຮັບສະເພາະການກິດຈະການ. ການຂາດທຶນຈາກການເສື່ອມຄ່າຈະຖືກຮັບຮູ້ໃນໃບລາຍງານຜົນໄດ້ຮັບເປັນ "ລາຍຈ່າຍຂາດທຶນສິນເຊື່ອ"

ສາຂາອາດຈະອອກຂໍ້ຜູກພັນ ໃຫ້ແກ່ເງິນກູ້ທີ່ແນ່ນອນ ເມື່ອເງິນກູ້ໃນເວລາຖືກຖອນ ຄາດຫວັງວ່າຈະຖືກຈັດປະເພດເປັນການເຄື່ອນໄຫວທີ່ມີໄວ້ເພື່ອຊື້ຂາຍ ເພາະວ່າຈຸດປະສົງແມ່ນຂາຍເງິນກູ້ໄລຍະສັ້ນ. ຂໍ້ຜູກພັນເຫລົ່ານີ້ຈະຖືກບັນທຶກເປັນອານຸພັນ ແລະ ຖືກປະເມີນມູນຄ່າຍຸຕິທຳຜ່ານກຳໄລ ຫລື ຂາດທຶນ.

ເມື່ອເງິນກູ້ໃນເວລາຖືກຖອນຄາດຫວັງວ່າຈະຖືກຮັກສາໂດຍສາຂາ ແລະ ຈະບໍ່ຖືກຂາຍອອກໃນໄລຍະສັ້ນ, ຂໍ້ຜູກພັນຈະຖືກບັນທຶກເມື່ອສັນຍາໄດ້ຖືກເຮັດຂຶ້ນ ແລະ ມີແນວທ່າອ່ຽງບອກວ່າການຂາດທຶນຈະເພີ່ມຂຶ້ນ (ຕົວຢ່າງ: ລາຍການໜີ້ຕ້ອງສົ່ງສິນເຊື່ອໃຫ້ຄູ່ສັນຍາ).

## 2. ນະໂຍບາຍການບັນຊີ (ຕໍ່)

### *2.5 ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)*

### *2.5.2 ເຄື່ອງມືທາງການເງິນ - ການຮັບຮູ້ເບື້ອງຕົ້ນ ແລະ ການຕີມູນຄ່າຕາມພາຍຫລັງ (ຕໍ່)*

#### *2.5.2.5 ການຈັດປະເພດຊັບສິນການເງິນຄືນໃໝ່*

ມີຜົນບັງຄັບແຕ່ວັນທີ 1 ກໍລະກົດ 2008, ສາຂາໄດ້ຮັບອະນຸຍາດໃຫ້ຈັດປະເພດຄືນໃໝ່ໃນເງື່ອນໄຂທີ່ແນ່ນອນ ສຳລັບບັນດາຊັບສິນທາງການເງິນທີ່ບໍ່ແມ່ນອານຸພັນອອກຈາກໝວດ "ຫລັກຊັບປະເພດມີໄວ້ເພື່ອການຄ້າ" ໄປເປັນໝວດຫລັກຊັບປະເພດມີໄວ້ເພື່ອຊື້ຂາຍ "ປະເພດເງິນກູ້ ແລະ ໜີ້ຕ້ອງຮັບ" ຫຼື "ຫລັກຊັບປະເພດຖືໄວ້ຈົນຄົບກຳນົດ". ນັບຈາກວັນທີດັ່ງກ່າວ, ສາຂາຍັງໄດ້ຮັບອະນຸຍາດໃຫ້ຈັດປະເພດຄືນໃໝ່ບັນດາເຄື່ອງມືທາງການເງິນອອກຈາກໝວດ "ຫລັກຊັບມີໄວ້ເພື່ອຊື້ຂາຍ" ໄປເປັນໝວດ "ປະເພດເງິນກູ້ ແລະ ໜີ້ຕ້ອງຮັບ. ການຈັດປະເພດຄືນໃໝ່ມູນຄ່າຈາກການຈັດປະເພດຄືນໃໝ່ຈະຖືກບັນທຶກອີງຕາມມູນຄ່າຍຸດຕິທຳໃນມື້ທີ່ຈັດປະເພດຄືນໃໝ່, ເຊິ່ງມູນຄ່າດັ່ງກ່າວນັ້ນຈະກາຍເປັນມູນຄ່າເສື່ອມໃໝ່.

ສຳລັບຊັບສິນການເງິນທີ່ຖືກຈັດເປັນປະເພດໝວດ "ຫລັກຊັບມີໄວ້ເພື່ອຂາຍ", ທຸກໆກຳໄລ ແລະ ຂາດທຶນຜ່ານມາທີ່ເກີດຈາກຊັບສິນດັ່ງກ່າວ ເຊິ່ງຖືກບັນທຶກໃນທຶນຕົນເອງ ແມ່ນຖືກລົບລ້າງເປັນກຳໄລ ຫຼື ຂາດທຶນ ຕໍ່ກັບໄລຍະເວລາທີ່ເຫຼືອໃນການລົງທຶນໂດຍການໃຊ້ອັດຕາດອກເບ້ຍທີ່ແທ້ຈິງ (EIR). ທຸກໆສ່ວນຜິດດ່ຽງລະຫວ່າງມູນຄ່າຫຼຸດລົງຕາມຕົ້ນທຶນໃໝ່ ແລະ ກະແສເງິນສົດຄາດຄະເນ ແມ່ນຈະຖືກບັນທຶກບັນຊີ ອີງຕາມອາຍຸການຂອງລາຍການຊັບສິນດັ່ງກ່າວທີ່ຍັງເຫລືອ ໂດຍນຳໃຊ້ອັດຕາດອກເບ້ຍທີ່ແທ້ຈິງ (EIR). ຖ້າຕໍ່ມາຊັບສິນມີການເສື່ອມຄ່າ ທີ່ລົງບັນຊີເປັນທຶນຕົນເອງນັ້ນແມ່ນຈະຖືກນຳມາເຂົ້າໃໝ່ໃນລາຍງານຜົນໄດ້ຮັບ.

ສາຂາອາດຈະຈັດປະເພດຊັບສິນການຄ້າທີ່ບໍ່ແມ່ນອານຸພັນ ອອກຈາກໝວດ " ຊັບສິນທີ່ມີໄວ້ເພື່ອການຄ້າ " ແລະ ຈັດເຂົ້າໃນໝວດ " ເງິນກູ້ ແລະ ໜີ້ຕ້ອງຮັບ " ຖ້າການເຄື່ອນໄຫວສອດຄ່ອງກັບຄວາມໝາຍຂອງເງິນກູ້ ແລະ ໜີ້ຕ້ອງຮັບ ແລະ ສາຂາມີຄວາມຕັ້ງໃຈ ແລະ ຄວາມສາມາດທີ່ຈະຖືໄວ້ຕໍ່ໄປ ຫລື ຈົນຄົບກຳນົດ. ຖ້າຫາກຊັບສິນຖືກຈັດປະເພດຄືນໃໝ່ ແລະ ຖ້າສາຂາສືບຕໍ່ເພີ່ມການຄາດຄະເນເງິນສົດທີ່ຈະໄດ້ຮັບໃນອະນາຄົດວ່າເປັນຜົນມາຈາກການເພີ່ມຂຶ້ນຂອງຄວາມ ສາມາດທີ່ຈະໄດ້ຮັບຈາກເງິນສົດດັ່ງກ່າວ, ຜົນກະທົບຂອງການເພີ່ມຂຶ້ນນັ້ນແມ່ນຖືກຮັບຮູ້ເປັນການດັດແກ້ອັດຕາດອກເບ້ຍຕົວຈິງຈາກມື້ທີ່ການຄາດຄະເນມີການປ່ຽນ.

ການຈັດປະເພດຄືນໃໝ່ແມ່ນການເລືອກໂດຍຄະນະອຳນວຍການ ແລະ ເຄື່ອງມືຖືກກຳນົດໂດຍພື້ນຖານຂອງເຄື່ອງມື.

### *2.5.3 ການສະສາງຊັບສິນ ແລະ ໜີ້ສິນທາງການເງິນອອກຈາກບັນຊີ*

#### *2.5.3.1 ຊັບສິນທາງການເງິນ*

ຊັບສິນທາງການເງິນ (ຫລື ສ່ວນໜຶ່ງຂອງຊັບສິນການເງິນ ຫລື ສ່ວນໜຶ່ງຂອງກຸ່ມຊັບສິນການເງິນທີ່ຄ້າຍຄືກັນ) ຈະຖືກສະສາງອອກຈາກຊັບສິນກໍ່ຕໍ່ເມື່ອ:

- ສິດໃນການຮັບກະແສເງິນສົດຈາກຊັບສິນໄດ້ໝົດກຳນົດແລ້ວ;
- ສາຂາໄດ້ໂອນກຳມະສິດໃນການຮັບກະແສເງິນສົດຈາກຊັບສິນ ຫລື ໄດ້ຍອມຮັບພັນທະໃນການຈ່າຍເງິນສົດທີ່ໄດ້ຮັບທັງໝົດຕາມກຳນົດເວລາໃຫ້ແກ່ບຸກຄົນທີສາມພາຍໃຕ້ຮູບແບບ "ການຕິດພັນ" ແລະ ລວມທັງ:
  - ສາຂາໄດ້ໂອນຄວາມສ່ຽງ ແລະ ຜົນຕອບແທນຂອງຊັບສິນທັງໝົດ, ຫລື
  - ຮັກສາຄວາມສ່ຽງ ແລະ ຜົນຕອບແທນຂອງຊັບສິນທັງໝົດ, ແຕ່ໄດ້ໂອນການຄຸ້ມຄອງຊັບສິນ.

**2. ນະໂຍບາຍການບັນຊີ (ຕໍ່)**

***2.5 ສະຫຼຸບະໂຍບາຍການບັນຊີທີ່ສຳຄັນ (ຕໍ່)***

*2.5.3 ການສະສາງຊັບສິນ ແລະ ໜີ້ສິນທາງການເງິນອອກຈາກບັນຊີ (ຕໍ່)*

*2.5.3.1 ຊັບສິນທາງການເງິນ (ຕໍ່)*

ເມື່ອສາຂາໄດ້ໂອນສິດໃນການໄດ້ຮັບເງິນສົດຈາກຊັບສິນ ຫລື ໄດ້ເຂົ້າຮ່ວມໃນຮູບແບບການຕິດພັນ ແລະ ບໍ່ໄດ້ໂອນ ຫລື ຍັງຄົງຮັກສາຄວາມສ່ຽງທັງໝົດ ແລະ ຜົນຕອບແທນຂອງຊັບສິນ ຫລື ໄດ້ໂອນສິດໃນການຄຸ້ມຄອງຊັບສິນ, ຊັບສິນທີ່ເພີ່ມຂຶ້ນຂອງສາຂາ. ໃນກໍລະນີນີ້, ສາຂາຍັງຮັບຮູ້ເປັນໜີ້ສິນທີ່ກ່ຽວຂ້ອງ. ຊັບສິນທີ່ຖືກໂອນ ແລະ ໜີ້ສິນທີ່ທີ່ກ່ຽວຂ້ອງຖືກຄິດໄລ່ຢ່າງຖືກຕ້ອງບົນພື້ນຖານທີ່ວ່າມັນຈະມີຜົນກະທົບຕໍ່ສິດ ແລະ ພັນທະຂອງສາຂາທີ່ຍັງຄົງຢູ່.

ເອກະສານທີ່ກ່ຽວຂ້ອງກັບການຄໍ້າປະກັນການໂອນຊັບສິນແມ່ນ ຕ້ອງໃສ່ມູນຄ່າທີ່ຕໍ່າກວ່າມູນຄ່າຕາມບັນຊີໃນເບື້ອງຕົ້ນ ແລະ ສາຂາຕ້ອງຊຳລະຄືນຕາມມູນຄ່າສູງສຸດຂອງຊັບສິນ.

*2.5.3.2 ໜີ້ສິນທາງການເງິນ*

ໜີ້ສິນການເງິນຈະໝົດໄປເມື່ອໜີ້ສິນຖືກຊຳລະ ຫລື ຖືກຍົກເລີກ ຫລື ໝົດກຳນົດ. ເມື່ອໜີ້ສິນການເງິນທີ່ມີຢູ່ຖືກແທນທີ່ດ້ວຍໜີ້ສິນອື່ນໆຈາກເຈົ້າໜີ້ຜູ້ເກົ່າໃນເງື່ອນໄຂທີ່ແຕກຕ່າງກັນ, ຫລື ປັບປຸງເງື່ອນໄຂຂອງໜີ້ສິນທີ່ມີຢູ່ເຊັ່ນ: ການປ່ຽນແປງ ຫລື ການປັບປຸງຖືກປະຕິບັດເຊັ່ນດຽວກັບການສະສາງບັນຊີໜີ້ສິນເດີມອອກ ແລະ ຮັບຮູ້ໜີ້ສິນໃໝ່ ແລະ ສ່ວນຜິດດ່ຽງຂອງຍອດຍົກມາຈະຖືກລາຍງານໃນໃບລາຍງານກຳໄລ ຫຼື ຂາດທຶນ.

*2.5.4 ການກຳນົດມູນຄ່າຍຸຕິທຳ*

ມູນຄ່າຍຸດຕິທຳຂອງຊັບສິນທາງການເງິນ ທີ່ມີການຊື້-ຂາຍໃນຕະຫຼາດນະມື້ທີ່ເຮັດເອກະສານລາຍງານແມ່ນອີງຕາມລາຄາປະກາດຂາຍຂອງຕະຫຼາດ ຫຼື ລາຄາປະກາດຂອງຜູ້ຂາຍ (ລາຄາທີ່ຜູ້ຊື້ສະເໜີຊື້ ສຳລັບຖານະຊື້ເກັບໄວ້ ແລະ ລາຄາທີ່ຜູ້ຂາຍສະເໜີຂາຍ ສຳລັບຖານະຂາຍຢືມ) ໂດຍບໍ່ຍັງບໍ່ໄດ້ຫັກຄ່າໃຊ້ຈ່າຍທີ່ໃຊ້ເຂົ້າໃນທຸລະກຳດັ່ງກ່າວ.

ສຳລັບເຄື່ອງມືທາງການເງິນອື່ນໆທັງໝົດທີ່ມີການຊື້-ຂາຍໃນຕະຫຼາດ, ລາຄາຍຸຕິທຳແມ່ນພິຈາລະນາໂດຍການ ນຳໃຊ້ວິທີການປະເມີນມູນຄ່າຕາມແບບທີ່ເໝາະສົມ. ວິທີການປະເມີນມູນຄ່າແມ່ນລວມມີ: ວິທີສ່ວນລຸດກະແສເງິນສົດ, ການສົມທຽບກັບລາຄາຂອງລາຍການທີ່ຄ້າຍຄືກັນ ຖ້າຫາກມີລາຄາທີ່ມີການຊື້ຂາຍໃນຕະຫຼາດເຊິ່ງລາຄາສາມາດສັງເກດເຫັນໄດ້, ແບບລາຄາທາງເລືອກ (options pricing models), ແບບສິນເຊື່ອ ແລະ ແບບຕີມູນຄ່າອື່ນໆທີ່ກ່ຽວຂ້ອງ.

ບາງເຄື່ອງມືທາງການເງິນແມ່ນບັກທຶກຕາມມູນຄ່າຍຸຕິທຳທີ່ນຳໃຊ້ວິທີຕີມູນຄ່າທີ່ບໍ່ມີລາຄາປັດຈຸບັນຂອງຕະຫຼາດ ແລະ ຂໍ້ມູນທີ່ສາມາດສັງເກດເຫັນໄດ້ໃນຕະຫຼາດ, ມູນຄ່າຍຸຕິທຳແມ່ນພິຈາລະນາໂດຍການໃຊ້ວິທີປະເມີນມູນຄ່າທີ່ໄດ້ທົດສອບລາຄາ ຫຼື ປັດໄຈ ທີ່ມີຜົນຕໍ່ລາຍການທີ່ເກີດຂຶ້ນຈິງໃນຕະຫຼາດ ແລະ ນຳໃຊ້ການພິຈາລະນາຂອງທະນາຄານໃນການຄາດຄະເນວິທີທີ່ເໝາະສົມທີ່ສຸດ. ວິທີແມ່ນໄດ້ດັດປັບໃຫ້ສະທ້ອນໃຫ້ຄອບຄຸມເອົາ ລາຄາທີ່ຜູ້ຊື້ສະເໜີຊື້ ແລະ ລາຄາທີ່ຜູ້ຂາຍສະເໜີຂາຍເພື່ອໃຫ້ສະແດງເຖິງຕົ້ນທຶນທີ່ຕ້ອງນຳໃຊ້ເພື່ອຂາຍລາຍການດັ່ງກ່າວ, ການດັດແກ້ການຕີມູນຄ່າ ໜີ້ ແລະ ມີ, ການຫາຍສະພາບຄ່ອງ ແລະ ຂໍ້ຈຳກັດຂອງວິທີດັ່ງກ່າວ. ນອກຈາກນີ້ ກຳໄລ ຫຼື ຂາດທຶນ ທີ່ໄດ້ມີການຄິດໄລ່ໄວ້ໃນຕອນທີ່ເຄື່ອງມືທາງການເງິນຖືກບັນທຶກຄັ້ງທຳອິດ (ມື້ທີ 1 ກຳໄລ/ຂາດທຶນ) ໄດ້ຖືກເບື້ອນອອກໄປ ແລະ ຈະຮັບຮູ້ ເມື່ອປັດໃຈສາມາດສັງເກດໄດ້ ຫຼື ການບໍ່ສາມາດຮັບຮູ້ເຄື່ອງມືທາງການເງິນ.

**2. ນະໂຍບາຍການບັນຊີ (ຕໍ່)**

***2.5 ສະຫຼຸບະໂຍບາຍການບັນຊີທີ່ສຳຄັນ (ຕໍ່)***

*2.5.5 ການເສື່ອມມູນຄ່າຂອງຊັບສິນການເງິນ*

ສາຂາປະເມີນໃນມື້ເຮັດບົດລາຍງານວ່າມີຫລັກຖານລະບຸທີ່ສະແດງໃຫ້ເຫັນວ່າຊັບສິນການເງິນ ຫລື ກຸ່ມຂອງຊັບສິນການເງິນມີການເສື່ອມມູນຄ່າ ຫລື ບໍ່. ຊັບສິນການເງິນ ຫລື ກຸ່ມຂອງຊັບສິນການເງິນ ຈະຖືວ່າມີຄວາມເສຍຫາຍຖ້າພຽງແຕ່ວ່າມີຫລັກຖານລະບຸຄວາມເສຍຫາຍຈາກຜົນຂອງໜຶ່ງ ຫລື ຫຼາຍເຫດການທີ່ປະກົດຂຶ້ນຫລັງຈາກມີການຮັບຮູ້ຊັບສິນ (ເກີດມີ "ເຫດການເສຍຫາຍ") ແລະ ເຫດການເສຍຫາຍນັ້ນ(ຫຼາຍເຫດການ) ໄດ້ສົ່ງຜົນກະທົບເຖິງການຄາດຄະເນກະແສເງິນສົດໃນອະນາຄົດຂອງຊັບສິນການເງິນ ຫລື ກຸ່ມຂອງຊັບສິນການເງິນທີ່ສາມາດຄາດຄະເນໄດ້ຢ່າງໜ້າເຊື່ອຖື.

ຫລັກຖານຂອງການເສື່ອມມູນຄ່າອາດລວມມີສິ່ງທີ່ບົ່ງເຖິງຄວາມຫຍຸ້ງຍາກທາງດ້ານການເງິນ ຂອງຜູ່ຢືມ ຫລື ກຸ່ມຂອງຜູ່ຢືມ, ການຜິດສັນຍາ ຫລື ບໍ່ສາມາດຊຳລະຕົ້ນທຶນ ແລະ ດອກເບ້ຍ, ມີຄວາມເປັນໄປໄດ້ວ່າພວກເຂົາຈະລົ້ມລະລາຍ ຫລື ການປັບປຸງລະບົບການເງິນຄືນໃໝ່ ແລະ ຂໍ້ມູນອື່ນໆທີ່ສະແດງໃຫ້ເຫັນວ່າກະແສເງິນສົດທີ່ຖືກປະເມີນໃນອະນາຄົດຫລຸດລົງເຊັ່ນການປ່ຽນແປງໜີ້ເກີນກຳນົດ ຫລື ເງື່ອນໄຂດ້ານເສດຖະກິດທີ່ກ່ຽວຂ້ອງກັບການຜິດສັນຍາ.

*ຊັບສິນການເງິນທີ່ບັນທຶກຕາມການຫຼຸດຕົ້ນທຶນລົງ (Amortized cost)*

ສຳລັບການຫັກຄ່າເສື່ອມຕົ້ນທຶນຊັບສິນການເງິນ (ເຊັ່ນ: ໜີ້ຕ້ອງຮັບຈາກທະນາຄານອື່ນ, ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າເຊັ່ນດຽວກັບການລົງທຶນທີ່ຖືໄວ້ຈົນຮອດມື້ຄົບກຳນົດ), ສາຂາປະເມີນເອງໃນເບື້ອງຕົ້ນວ່າ:ຫລັກຖານການເສື່ອມຄ່າຂອງຊັບສິນການເງິນນັ້ນສຳຄັນ ຫລື ບໍ່. ຖ້າທະນາຄານກຳນົດວ່າບໍ່ມີຫລັກຖານການເສື່ອມຄ່າສຳລັບຊັບສິນການເງິນ, ລວມທັງຊັບສິນໃນກຸ່ມຂອງຊັບສິນການເງິນທີ່ຄ້າຍຄືກັບຄວາມສ່ຽງສິນເຊື່ອ ແລະ ໄດ້ປະເມີນຄວາມເສຍຫາຍຂອງຊັບສິນເຫລົ່ານັ້ນ. ບັນດາຊັບສິນທີ່ຖືກປະເມີນຄວາມເສຍຫາຍ ແລະ ຄວາມເສຍຫາຍດັ່ງກ່າວນັ້ນບໍ່ໄດ້ລວມເຂົ້າໃນຄວາມເສຍຫາຍທັງໝົດ.

ຖ້າຫາກມີຫລັກຖານວ່າຄ່າເສື່ອມໜີ້ເສຍເກີດຂຶ້ນ, ມູນຄ່າຂາດທຶນຈະຖືກຄິດໄລ່ເປັນສ່ວນຕ່າງລະຫວ່າງ ຍອດຍົກມາຂອງຊັບສິນ ແລະ ຍອດເຫລືອປັດຈຸບັນຂອງກະແສເງິນສົດໃນອະນາຄົດ (ບໍ່ລວມເອົາຄ່າເສື່ອມໜີ້ເສຍທີ່ອາດຈະເກີດຂຶ້ນໃນອະນາຄົດ). ຍອດຍົກມາຂອງຊັບສິນຫລຸດລົງ ແລະ ຖືກລົງບັນຊີສ່ວນຫລຸດ ແລະ ມູນຄ່າທີ່ຂາດທຶນແມ່ນຖືກລາຍງານໃນໃບລາຍງານຜົນໄດ້ຮັບ. ລາຍຮັບດອກເບ້ຍຈະຖືກຄິດໄລ່ຢ່າງຕໍ່ເນື່ອງຕາມຍອດເຫລືອ ແລະ ຖືກຄິດໄລ່ໂດຍນຳໃຊ້ອັດຕາດອກເບ້ຍສ່ວນຫລຸດກະແສເງິນສົດໃນອະນາຄົດ ເພື່ອປະເມີນຄ່າເສື່ອມໜີ້ເສຍ. ລາຍຮັບດອກເບ້ຍຖືກລົງບັນຊີ "ລາຍຮັບດອກເບ້ຍ ແລະ ດອກເບ້ຍຄ້າຍຄືກັນ".

ເງິນກູ້ ແລະ ສ່ວນຫລຸດທີ່ກ່ຽວຂ້ອງກັບເງິນກູ້ ຈະຖືກສະສາງອອກເມື່ອສາຂາໄດ້ພິຈາລະນາວ່າຈະບໍ່ສາມາດເກັບໜີ້ໄດ້ ແລະ ເມື່ອຫລັກຊັບຄໍ້າປະກັນຖືກໂອນໃຫ້ສາຂາ. ຖ້າໃນປີຕໍ່ມາ, ຄ່າເສື່ອມໜີ້ເສຍຈະເພີ່ມຂຶ້ນ ຫລື ຫລຸດລົງຍ້ອນວ່າ ລູກຄ້າໄດ້ມາຊຳລະຫລັງຈາກຖືກຫັກຄ່າເສື່ອມ, ຄ່າເສື່ອມໜີ້ເສຍທີ່ຖືກຫັກໄວ້ກ່ອນໜ້ານີ້ຖືກ ເພີ່ມຂຶ້ນ ຫລື ຫລຸດລົງຕາມ ການດັດແກ້ໃນບັນຊີສ່ວນຫລຸດ, ຖ້າໃນອະນາຄົດຈະສາມາດເກັບຄືນໄດ້, ຄ່າເສື່ອມທີ່ເກັບຄືນນັ້ນຈະຖືກລົງບັນຊີເບື້ອງມີໃນບັນຊີ "ລາຍຈ່າຍໜີ້ເສຍ".

ມູນຄ່າປັດຈຸບັນຂອງກະແສເງິນສົດໃນອະນາຄົດທີ່ຄາດຄະເນໄວ້ແມ່ນມູນຄ່າໃນປັດຈຸບັນຕາມອັດຕາດອກເບ້ຍຕົວຈິງຂອງຊັບສິນການເງິນ. ຖ້າເງິນກູ້ມີອັດຕາດອກເບ້ຍທີ່ຜັນແປ, ອັດຕາສ່ວນຫລຸດສຳລັບການຕີມູນຄ່າຂອງຄ່າເສື່ອມມູນຄ່າແມ່ນອັດຕາດອກເບ້ຍຕົວຈິງໃນປັດຈຸບັນ. ຖ້າສາຂາໄດ້ຈັດປະເພດຊັບສິນການຄ້າເປັນເງິນກູ້ ແລະ ເງິນລ່ວງໜ້າ, ອັດຕາສ່ວນຫລຸດສຳລັບຄິດໄລ່ຄ່າເສື່ອມ ແມ່ນຕ້ອງນຳໃຊ້ອັດຕາດອກເບ້ຍຕົວຈິງໃນປັດຈຸບັນ. ການຄິດໄລ່ມູນຄ່າປັດຈຸບັນ ຂອງກະແສເງິນສົດໃນອະນາຄົດທີ່ຄາດຄະເນໄວ້ຂອງຫລັກຊັບຄໍ້າປະກັນມີຜົນກະທົບຕໍ່ກະແສເງິນສົດ ເຊິ່ງອາດເປັນຜົນມາຈາກຫລັກຊັບຄໍ້າປະກັນທີ່ຍຶດມາໄດ້ ລົບໃຫ້ຕົ້ນທຶນຂອງຫລັກຊັບຄໍ້າປະກັນທີ່ໄດ້ຮັບ ແລະ ຂາຍ ບໍ່ວ່າການຍຶດຫລັກຊັບຈະເປັນໄປໄດ້ ຫລື ບໍ່ກໍ່ຕາມ.

## 2. ນະໂຍບາຍການບັນຊີ (ຕໍ່)

### *2.5 ສະຫຼຸບະໂຍບາຍການບັນຊີທີ່ສຳຄັນ (ຕໍ່)*

#### *2.5.5 ການເສື່ອມມູນຄ່າຂອງຊັບສິນການເງິນ (ຕໍ່)*

ເພື່ອຈຸດປະສົງ ໃນປະເມີນການເສື່ອມຄ່າແບບເປັນກຸ່ມ, ຊັບສິນການເງິນແມ່ນຖືກຈັດເປັນກຸ່ມບົນພື້ນຖານຕາມລັກສະນະຄວາມສ່ຽງທີ່ຄ້າຍຄືກັນ.

ກະແສເງິນສົດໃນອານາຄົດຂອງກຸ່ມຊັບສິນການເງິນທີ່ມີການຫັກຄ່າເສື່ອມມູນຄ່າເປັນກຸ່ມ ແມ່ນຖືກຄາດຄະເນບົນພື້ນຖານການຂາດທຶນຜ່ານມາຂອງຊັບສິນກັບລັກສະນະຄວາມສ່ຽງສິນເຊື່ອທີ່ຄ້າຍຄືກັນໃນກຸ່ມ. ຂໍ້ມູນການຂາດທຶນທີ່ຜ່ານມາຈະຖືກດັດແກ້ ຕາມພື້ນຖານຂໍ້ມູນທີ່ມີໃນປັດຈຸບັນ ເພື່ອສະແດງໃຫ້ເຫັນຜົນກະທົບຂອງເງື່ອນໄຂໃນປັດຈຸບັນຂອງຂໍ້ມູນການສູນເສຍໃນອະດີດທີ່ໄດ້ນຳໄຊ້ເຂົ້າເປັນພື້ນຖານຂ້າງເທິງ ແລະ ເພື່ອເອົາຜົນກະທົບຂອງເງື່ອນໄຂໃນໄລຍະຜ່ານມາທີ່ໄດ້ຖືກນຳໃຊ້ເຂົ້າເປັນພື້ນຖານ ແຕ່ບໍ່ມີແລ້ວໃນປັດຈຸບັນອອກ.

ການຄາດຄະເນການປ່ຽນແປງທີ່ສ່ອງແສງເຖິງກະແສເງິນສົດໃນອະນາຄົດ ແລະ ເປັນໄປໃນທາງດຽວກັນກັບການປ່ຽນແປງຂອງຂໍ້ມູນທີ່ສັງເກດໄດ້ຈາກປີຕໍ່ປີ (ເຊັ່ນການປ່ຽນແປງອັດຕາການວ່າງງານ, ລາຄາຊັບສິນ, ລາຄາສິນຄ້າ, ເງື່ອນໄຂການຊຳລະຫລື ປັດໄຈອື່ນໆທີ່ບົ່ງບອກເຖິງການຂາດທຶນໃນກຸ່ມ ແລະ ຄວາມສຳຄັນຂອງການຂາດທຶນ). ວິທີການ ແລະ ຂໍ້ສົມມຸດຖານທີ່ນຳໃຊ້ໃນການຄາດຄະເນກະແສເງິນສົດໃນອະນາຄົດໄດ້ທົບທວນຄືນຢ່າງເປັນປົກກະຕິ ເພື່ອຫລຸດສ່ວນຜິດດ່ຽງລະຫວ່າງຂາດທຶນທີ່ຄາດຄະເນ ແລະ ຂາດທຶນຕົວຈິງ.

*ການເຈລະຈາຄືນກ່ຽວກັບເງິນກູ້*

ຖ້າເປັນໄປໄດ້, ສາຂາພະຍາຍາມຊອກຫາວິທີທາງເຈລະຈາກັບລູກຄ້າເງິນກູ້ທີ່ມີບັນຫາດ້ວຍການປັບໂຄງສ້າງໜີ້ຄືນໃໝ່ ແທນທີ່ຈະຍຶດຫຼັກຊັບຄ້ຳປະກັນ. ໃນນີ້ອາດລວມໄປເຖິງການເລື່ອນເວລາຊຳລະເງິນກູ້ ແລະ ເຮັດຂໍ້ຕົກລົງກ່ຽວກັບເງື່ອນໄຂ ຂອງເງິນກູ້ບ້ວງໃໝ່. ເມື່ອໄລຍະການຊຳລະໜີ້ໄດ້ຮັບການເຈລະຈາ, ທຸກໆການເສື່ອມມູນຄ່າຈະຖືກວັດແທກດ້ວຍອັດຕາດອກເບ້ຍທີ່ແທ້ຈິງດັ່ງທີ່ໄດ້ຖືກຄິດໄລ່ມາກ່ອນການເຈລະຈະໄລຍະການຊຳລະເງິນກູ້ ແລະ ເງິນກູ້ບ້ວງນັ້ນກໍ່ຈະບໍ່ກາຍກຳນົດ. ຄະນະບໍລິຫານສືບຕໍ່ທົບທວນການເຈລະຈາເງິນກູ້ ເພື່ອໃຫ້ແນ່ໃຈວ່າການເຈລະຈານັ້ນສຳເລັດຜົນ ແລະ ສາມາດຊຳລະເງິນກູ້ໃນອະນາຄົດ. ເງິນກູ້ເຫລົ່ານັ້ນຈະຖືກຈັດປະເພດເປັນສ່ວນບຸກຄົນ ຫລື ການເສື່ອມມູນຄ່າທີ່ຖືກປະເມີນວ່າຈະເກັບຄືນ, ຖືກຄິດໄລ່ດ້ວຍອັດຕາດອກເບ້ຍຕົວຈິງຂອງເງິນກູ້.

*ການຕີມູນຄ່າຫລັກຊັບຄ້ຳປະກັນ*

ສາຂາຊອກຫາວິທີທີ່ຈະນຳໃຊ້ຫລັກຊັບຄ້ຳປະກັນ, ຖ້າເປັນໄປໄດ້, ເພື່ອຫລຸດຜ່ອນຄວາມສ່ຽງຂອງຊັບສິນການເງິນ. ຫລັກຊັບຄ້ຳປະກັນອາດເປັນໄດ້ຫຼາຍຮູບແບບເຊັ່ນ: ເງິນສົດ, ຫລັກຊັບ, ໜັງສືສິນເຊື່ອ/ຄ້ຳປະກັນ, ດິນ ແລະ ເຮືອນ, ໜີ້ຕ້ອງຮັບ, ເຄື່ອງໃນສາງ, ຊັບສິນທີ່ບໍ່ແມ່ນການເງິນອື່ນໆ ແລະ ການປັບປຸງສິນເຊື່ອເຊັ່ນ: ຂໍ້ຕົກລົງຊຳລະສະສາງໂດຍທົ່ວໄປ ມູນຄ່າຍຸຕິທຳຂອງຫລັກຊັບຄ້ຳປະກັນແມ່ນຖືກປະເມີນໂດຍທົ່ວໄປໃນມູນຄ່າຕ່ຳສຸດໃນເບື້ອງຕົ້ນ ຫລື ຕາມບົດລາຍງານສຳລັບທັກເດືອນຕົ້ນປີຂອງສາຂາ, ເຖິງຢ່າງໃດກໍ່ຕາມ, ຫລັກຊັບຄ້ຳປະກັນບາງຮູບແບບເຊັ່ນ: ເງິນສົດ ຫລື ຫລັກຊັບທີ່ກ່ຽວຂ້ອງກັບເງື່ອນໄຂສ່ວນຫລຸດແມ່ນຈະຖືກປະເມີນທຸກມື້.

ເພື່ອເພີ່ມຄວາມເປັນໄປໄດ້, ສາຂາໄດ້ນຳໃຊ້ຂໍ້ມູນຈາກຕະຫຼາດທີ່ມີການເຄື່ອນໄຫວສຳລັບປະເມີນຊັບສິນການເງິນ,ທີ່ໃຊ້ເປັນຫລັກຊັບຄ້ຳປະກັນ. ຊັບສິນການເງິນອື່ນໆທີ່ຍັງບໍ່ສາມາດກຳນົດມູນຄ່າຕາມທ້ອງຕະຫຼາດຈະຖືກປະເມີນໂດຍໃຊ້ຮູບແບບການປະເມີນ. ຫລັກຊັບຄ້ຳປະກັນທີ່ບໍ່ແມ່ນທາງການເງິນເຊັ່ນ: ດິນ ແລະ ເຮືອນ, ຈະຖືກປະເມີນຕາມຂໍ້ມູນທີ່ໄດ້ຈາກບຸກຄົນທີສາມເຊັ່ນ: ນາຍໜ້າ, ລາຄາທີ່ພັກອາໃສ, ເອກະສານລາຍງານການເງິນທີ່ຖືກກວດສອບແລ້ວ ແລະ ແຫລ່ງຂໍ້ມູນອື່ນໆ.

*ຫລັກຊັບຄ້ຳປະກັນທີ່ຍຶດຄືນໄດ້*

ນະໂຍບາຍສາຂາແມ່ນກຳນົດວ່າຊັບສິນທີ່ຍຶດມາສາມາດນຳໃຊ້ເຂົ້າໃນການດຳເນີນກິດຈະການພາຍໃນຂອງສາຂາ ຫຼື ຄວນຈະຂາຍ. ຊັບສິນທີ່ເປັນປະໂຫຍດສຳລັບການດຳເນີນງານພາຍໃນຈະຖືກໂອນເຂົ້າໄປເປັນປະເພດຊັບສິນແຕ່ລະປະເພດທີ່ກ່ຽວຂ້ອງເຊິ່ງຈະຖືກຕີມູນຄ່າຫຼຸດລົງຈາກມູນຄ່າທີ່ຍຶດມາຫຼືຍອດຍົກມາຂອງຊັບສິນທີ່ຖືກຄ້ຳປະກັນ.

**2. ນະໂຍບາຍການບັນຊີ (ຕໍ່)**

***2.5 ສະຫຼຸບະໂຍບາຍການບັນຊີທີ່ສຳຄັນ (ຕໍ່)***

*2.5.6 ການຫັກລ້າງເຄື່ອງມືທາງການເງິນ*

ຊັບສິນ ແລະ ໜີ້ສິນທາງການເງິນແມ່ນຖືກຫັກລ້າງກັນ ແລະ ມູນຄ່າສຸດທິຈະຖືກລາຍງານໃນໃບລາຍງານຖານະການເງິນ, ຖ້າຫາກວ່າສາຂາຖືກບັງຄັບທາງກົດໝາຍໃຫ້ສະສາງຈຳນວນເງິນດັ່ງກ່າວນັ້ນ ແລະ ສາຂາຕັ້ງໃຈຈະສະສາງໃນມູນຄ່າສຸດທິ ຫຼື ຂາຍຊັບສິນເພື່ອຊຳລະໜີ້ສິນໃນເວລາດຽວກັນ .ນີ້ບໍ່ແມ່ນກໍລະນີທົ່ວໄປໃນຂໍ້ຕົກລົງວ່າດວ້ຍການຫັກລ້າງລະຫວ່າງ ຊັບສິນ - ໜີ້ສິນ ແລະ ຊັບສິນ-ໜີ້ສິນທີ່ກ່ຽວຂ້ອງໄດ້ຖືກສະແດງມູນຄ່າລວມໃນໃບລາຍງານງານຖານະການເງິນ.

*2.5.7 ການຮັບຮູ້ລາຍຮັບ ແລະ ລາຍຈ່າຍ*

ລາຍຮັບຖືກຮັບຮູ້ເພື່ອຄາດຄະເນວ່າຜົນປະໂຫຍດທາງດ້ານເສດຖະກິດຈະໄຫຼມາສູ່ສາຂາ ແລະ ລາຍຮັບສາມາດຖືກວັດແທກມູນຄ່າໄດ້ .ຫລັກການການຮັບຮູ້ລາຍຮັບສະເພາະດັ່ງຕໍ່ໄປນີ້ຈະຕ້ອງຖືກພົບກ່ອນລາຍຮັບຈະຖືກຮັບຮູ້:

*2.5.7.1 ລາຍຮັບ ແລະ ລາຍຈ່າຍດອກເບ້ຍທີ່ຄ້າຍຄືດອກເບ້ຍ*

ສຳລັບທຸກໆເຄື່ອງມືທາງການເງິນທີ່ໄດ້ຕີມູນຄ່າຕາມແບບວິທີຫຼຸດຕົ້ນທຶນລົງ,ຊັບສິນທາງການເງິນທີ່ມີດອກເບ້ຍໄດ້ຈັດປະເພດເປັນຊັບສິນມີໄວ້ເພື່ອຂາຍ ແລະ ເຄື່ອງມືທາງການເງິນທີ່ໄດ້ບັນທຶກບັນຊີຕາມມູນຄ່າຍຸດຕິທຳໂດຍຜ່ານກຳໄລ ແລະ ຂາດທຶນ, ລາຍຮັບດອກເບ້ຍ ແລະ ລາຍຈ່າຍຖືກບັນທຶກໂດຍນຳໃຊ້ອັດຕາດອກເບ້ຍຕົວຈິງເຊິ່ງເປັນອັດຕາທີ່ສ່ວນຫລຸດໄດ້ຄາດຄະເນການຊຳລະເງິນສົດໃນອະນາຄົດ ຫລື ໄດ້ຮັບຕາມອາຍຸການນຳໃຊ້ຂອງເຄື່ອງມືການເງິນ ຫລື ໄລຍະນຳໃຊ້ທີ່ຍອມຮັບໄດ້ຂອງຍອດຍົກມາສຸດທິຂອງຊັບສິນ ຫລື ໜີ້ສິນການເງິນ. ການຄິດໄລ່ແມ່ນຕ້ອງອີງຕາມສັນຍາຂອງເຄື່ອງມືການເງິນ (ເຊັ່ນ: ກຳນົດຊຳລະ) ແລະ ຕ້ອງເອົາຄ່າທຳນຽມ ຫລື ຕົ້ນທຶນອື່ນໆຂອງເຄື່ອງມືການເງິນ ແລະ ສ່ວນໜຶ່ງຂອງອັດຕາດອກເບ້ຍຕົວຈິງ, ແຕ່ບໍ່ລວມເອົາໜີ້ເສຍໃນອະນາຄົດ.
ຍອດຍົກມາຂອງຊັບສິນ ຫລື ໜີ້ສິນການເງິນຈະຖືກດັດແກ້ໂດຍສາຂາຖ້າຫາກສາຂາມີການດັດແກ້ການຄາດຄະເນລາຍຮັບ ຫລື ລາຍຈ່າຍຂອງສາຂາ. ຍອດຍົກມາທີ່ດັດແກ້ນັ້ນແມ່ນຖືກຄິດໄລ່ໂດຍນຳໃຊ້ອັດຕາດອກເບ້ຍທີ່ແທ້ຈິງ ແລະ ມູນຄ່າດັ່ງກ່າວນັ້ນຈະຖືກລົງບັນຊີເປັນ "ລາຍຮັບອື່ນໆຈາກການດຳເນີນງານ". ເເນວໃດກໍ່ຕາມ, ສຳລັບປະເພດຊັບສິນທີ່ສາຂາຄາດຄະເນວ່າຈະເພີ່ມຂຶ້ນແມ່ນມາຈາກຈາກເງິນທີ່ຈະໄດ້ຮັບໃນອະນາຄົດເຊິ່ງເປັນຜົນມາຈາກສາຂາສາມາດເກັບໜີ້ໄດ້, ມູນຄ່າເພີ່ມຂຶ້ນຂອງຊັບສິນຈະຖືກບັນ ທຶກເປັນມູນຄ່າທີ່ຖືກດັດແກ້ມາຈາກອັດຕາດອກເບ້ຍທີ່ມີຜົນຈາກມື້ທີ່ມີການປ່ຽນແປງການຄາດຄະເນ.

ອີກຢ່າງໜຶ່ງ ມູນຄ່າຂອງຊັບສິນການເງິນຂອງກຸ່ມຊັບສິນທີ່ຄ້າຍຄືກັນທີ່ໄດ້ບັນທຶກນັ້ນແມ່ນມີມູນຄ່າຫລຸດລົງເນື່ອງຈາກການເສື່ອມຄ່າຂອງຊັບສິນ, ລາຍຮັບດອກເບ້ຍຈະສືບຕໍ່ຖືກຮັບຮູ້ໂດຍນຳໃຊ້ອັດຕາດອກເບ້ຍຕົວຈິງທີ່ນຳໃຊ້ເຂົ້າໃນການຄິດໄລ່ຍອດຍົກມາຍອດໃໝ່.

*2.5.7.2 ລາຍຮັບຄ່າທຳນຽມ ແລະ ຄ່ານາຍໜ້າ*

ສາຂາ ມີລາຍໄດ້ຈາກຄ່າທຳນຽມ ແລະ ຄ່ານາຍໜ້າຈາກການບໍລິການຫຼາກຫຼາຍເພື່ອຕອບສະໜອງໃຫ້ແກ່ລູກຄ້າ. ລາຍຮັບຈາກຄ່າທຳນຽມສາມາດຖືກແບ່ງເປັນສອງໝວດຕາມລຳດັບດັ່ງນີ້:

*ລາຍຮັບຄ່າທຳນຽມຈາກການບໍລິການໃນໄລຍະເວລາໃດໜຶ່ງ*

ຄ່າທຳນຽມທີ່ເກີດຈາກການບໍລິການໃນໄລຍະເວລາໃດໜຶ່ງໄດ້ຖືກຄິດໄລ່ຄ້າງຮັບໃນໄລຍະເວລາໃດໜຶ່ງ. ຄ່າທຳນຽມເຫຼົ່ານີ້ປະກອບດ້ວຍ ລາຍຮັບຈາກຄ່ານາຍໜ້າ ແລະ ການບໍລິການຊັບສິນ, ຄ່າຄຸ້ມຄອງ ແລະ ຄ່າບໍລິຫານ ແລະ ຄ່າໃຫ້ຄຳປຶກສາດ້ານອື່ນໆ. ຄ່າທຳນຽມຈາກການໃຫ້ຄຳໝັ້ນສັນຍາເງິນກູ້ຢືມ, ແຕ່ຖ້າຫາກເງິນກູ້ເຫຼົ່ານັ້ນບໍ່ມີຄວາມເປັນໄປໄດ້ທີ່ຈະຖືກເບີກຖອນຄ່າທຳນຽມຄຳໝັ້ນສັນຍາເງິນກູ້ຈະຖືກຮັບຮູ້ພາຍໃຕ້ໄລຍະເວລາທີ່ໄດ້ຕົກລົງກັນ.

**2. ນະໂຍບາຍການບັນຊີ (ຕໍ່)**

**2.5 *ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)***

2.5.7.2 *ລາຍຮັບຄ່າທຳນຽມ ແລະ ຄ່ານາຍໜ້າ (ຕໍ່)*

*ລາຍຮັບຄ່າທຳນຽມຈາກການໃຫ້ການບໍລິການ*

ຄ່າທຳນຽມທີ່ເກີດຂຶ້ນຈາກການເຈລະຈາ ຫຼື ມີສ່ວນຮ່ວມໃນການເຈລະຈາຂອງລາຍການເຄື່ອນໄຫວສຳລັບບຸກຄົນທີສາມ ເຊັ່ນ: ການຈັດຊື້ຮຸ້ນ ຫລື ຫລັກຊັບອື່ນ ຫລື ຊື້ຂາຍທຸລະກິດ, ເຊິ່ງໄດ້ຮັບການຍອມຮັບສົມບູນແບບຂອງການການເຄື່ອນໄຫວທຸລະກິດພື້ນຖານ. ຄ່າທຳນຽມ ຫລື ສ່ວນປະກອບຂອງຄ່າທຳນຽມທີ່ມີການເຊື່ອມໂຍງໄປຍັງທາງປະຕິບັດບາງປະການທີ່ໄດ້ຮັບການຍອມຮັບຫລັງຈາກການປະຕິບັດຕາມກົດໝາຍທີ່ສອດຄ່ອງກັນ.

2.5.8 *ເງິນສົດ ແລະ ທຽບເທົ່າເງິນສົດ*

ເງິນສົດ ແລະ ທຽບເທົ່າເງິນສົດດັ່ງທີ່ໄດ້ອ້າງອີງຢູ່ໃນບົດລາຍງານກະແສເງິນສົດປະກອບດ້ວຍເງິນສົດໃນກຳມື, ເງິນຝາກກະແສລາຍວັນກັບທະນາຄານກາງ ແລະ ໜີ້ຕ້ອງຮັບຈາກທະນາຄານອື່ນ ເມື່ອທວງຖາມ ຫຼື ເມື່ອຄົບກຳນົດ 3 ເດືອນ ຫຼື ໜ້ອຍກວ່ານັ້ນ.

2.5.9 *ຊັບສົມບັດ ແລະ ອຸປະກອນ*

ຊັບສົມບັດ ແລະ ອຸປະກອນ (ລວມທັງອຸປະກອນພາຍໃຕ້ການເຊົ່າສຳລັບການດຳເນີນງານບ່ອນທີ່ສາຂາເປັນຜູ້ໃຫ້ເຊົ່າ), ແມ່ນຖືກກຳນົດຕາມຕົ້ນທຶນເດີມໂດຍບໍ່ລວມຕົ້ນທຶນການບໍລິການປະຈຳວັນລົບຄ່າຫລຸຍຫ້ຽນສະສົມ ແລະ ຄ່າເສື່ອມມູນຄ່າສະສົມ (ຖ້າມີ). ການປ່ຽນແປງອາຍຸການນຳໃຊ້ແມ່ນຈະເຮັດໃຫ້ມີການປ່ຽນແປງວິທີການ ແລະ ໄລຍະຫັກຄ່າຫລຸ້ຍຫ້ຽນເຊິ່ງເຮັດໃຫ້ມີການປ່ຽນແປງໃນການຄາດຄະເນທາງດ້ານບັນຊີ.

ຄ່າຫລຸ້ຍຫ້ຽນແມ່ນຖືກຄິດໄລ່ແບບວິທີສະເໝີຕົວໂດຍການຫານມູນຄ່າຕົ້ນທຶນຂອງຊັບສົມບັດ ແລະ ອຸປະກອນ ກັບອາຍຸການນຳໃຊ້ຂອງພວກມັນ. ສິດນຳໃຊ້ທີ່ດິນຈະບໍ່ຖືກຫັກຄ່າຫລຸ້ຍຫ້ຽນ. ອັດຕາການຫັກຄ່າຫລຸ້ຍຫ້ຽນມີລາຍລະອຽດຂ້າງລຸ່ມນີ້:

| | |
|---|---|
| ອາຄານ ແລະ ການປັບປຸງ | 20% |
| ເຟີນີເຈີ ແລະ ເຄື່ອງຕົບແຕ່ງ | 20% |
| ອຸປະກອນຄອມພິວເຕີ | 33% |
| ພາຫານະ | 20% |

ຊັບສົມບັດ ແລະ ອຸປະກອນຈະຖືກເລີກຮັບຮູ້ເມື່ອເວລາມີການສະສາງອອກ ຫລື ບໍ່ສາມາດນຳໃຊ້ໄດ້ອີກແລ້ວ. ກຳໄລ ແລະ ຂາດທຶນທັງໝົດທີ່ເກີດຂຶ້ນ ຈາກການເລີກຮັບຮູ້ຂອງຊັບສິນ (ໄດ້ຄິດໄລ່ເປັນສ່ວນຕ່າງລະຫວ່າງມູນຄ່າໄດ້ຈາກການສະສາງ ແລະ ມູນຄ່າຕາມບັນຊີຂອງຊັບສິນ) ແມ່ນຖືກຮັບຮູ້ເປັນ "ລາຍຮັບອື່ນໆຈາກການດຳເນີນງານ" ໃນໃບລາຍງານຜົນໄດ້ຮັບຂອງປີທີຊັບສິນຈະຖືກສະສາງອອກ.

2.5.10 *ການເສື່ອມມູນຄ່າຂອງຊັບສິນອື່ນໆທີ່ບໍ່ແມ່ນການເງິນ*

ສາຂາປະເມີນນະມື້ເຮັດບົດລາຍງານວ່າມີຊັບສິນໃດທີ່ມີການເສື່ອມຄ່າ ຫລື ບໍ່. ຖ້າມີ ຫລື ເມື່ອມີຄວາມຈຳເປັນເຮັດການທົດສອບການເສື່ອມຄ່າຊັບສິນປະຈຳປີ, ສາຂາປະເມີນຈຳນວນເງິນທີ່ສາມາດເກັບກູ້ຄືນໄດ້ຂອງຊັບສິນ. ຈຳນວນເງິນທີ່ສາມາດເກັບກູ້ຄືນໄດ້ຂອງຊັບສິນ ແມ່ນໄດ້ຈາກ ມູນຄ່າທີ່ສູງກວ່າລະຫວ່າງ ມູນຄ່າຍຸດຕິທຳຂອງຊັບສິນ ຫຼື ມູນຄ່າຍຸດຕິທຳຂອງຫົວໜ່ວຍຊັບສິນທີ່ກໍ່ໃຫ້ເກີດເງິນສົດ (CGU) ລົບໃຫ້ຕົ້ນທຶນຂາຍ ແລະ ມູນຄ່າທີ່ຖືກນຳໃຊ້. ເມື່ອຍອດຍົກມາ ຂອງຊັບສິນ ຫຼື ມູນຄ່າຂອງ CGU ຫຼາຍກວ່າມູນຄ່າທີ່ສາມາດເກັບກູ້ຄືນໄດ້, ຊັບສິນຈະຖືວ່າເສື່ອມຄ່າ ແລະ ຈະຫຼຸດ ມູນຄ່າລົງໃຫ້ເທົ່າກັບມູນຄ່າທີ່ສາມາດເກັບກູ້ຄືນໄດ້.

## 2. ນະໂຍບາຍການບັນຊີ (ຕໍ່)

### *2.5 ສະຫຼຸບະໂຍບາຍການບັນຊີທີ່ສຳຄັນ (ຕໍ່)*

#### *2.5.10 ການເສື່ອມມູນຄ່າຂອງຊັບສິນອື່ນໆທີ່ບໍ່ແມ່ນການເງິນ (ຕໍ່)*

ໃນການປະເມີນມູນຄ່າທີ່ຖືກນຳໃຊ້, ກະແສເງິນສົດທີ່ຖືກປະເມີນໃນອະນາຄົດຖືກຫລຸດມູນຄ່າມາເປັນມູນຄ່າປະຈຸບັນໂດຍນຳໃຊ້ອັດຕາສ່ວນຫລຸດກ່ອນອາກອນ ທີ່ມີຜົນກະທົບຕໍ່ການປະເມີນມູນຄ່າປະຈຸບັນຂອງເງິນ ແລະ ຄວາມສ່ຽງສະເພາະຂອງຊັບສິນ. ໃນການກຳນົດມູນຄ່າຍຸດຕິທຳລົບໃຫ້ຕົ້ນທຶນຂາຍ, ແບບວິທີການຕີມູນຄ່າທີ່ເໝາະສົມຈະຖືກນຳໃຊ້. ການຄິດໄລ່ເຫຼົ່ານີ້ຈະຖືກຂຶ້ນໂດຍຜົນຄູນຂອງການຕີມູນຄ່າ, ລາຄາຮຸ້ນທີ່ກຳນົດສຳລັບການຄ້າຂາຍກັບບໍລິສັດໃນເຄືອ ຫລື ໂຕຊີ້ບອກມູນຄ່າຍຸດຕິທຳອື່ນໆ.

ສຳລັບຊັບສິນບໍ່ລວມຄ່ານິຍົມ, ການປະເມີນຈະຖືກເຮັດໃນມື້ສ້າງບົດລາຍງານເພື່ອເບິ່ງວ່າອາດຈະມີຕົວຊີ້ບອກເຖິງການເສື່ອມຄ່າຂອງຊັບສິນທີ່ຜ່ານມານັ້ນຈະບໍ່ເກີດຂຶ້ນອີກ ຫລື ອາດຫລຸດລົງ. ຖ້າຫາກມີຕົວຊີ້ບອກ, ສາຂາຈະຄາດຄະເນມູນຄ່າທີ່ສາມາດເກັບຄືນໄດ້ຂອງຊັບສິນ. ການເສື່ອມຄ່າທີ່ຮັບຮູ້ຜ່ານມາຈະເກັບຄືນມາໄດ້ກໍ່ຕໍ່ເມື່ອມັນມີການປ່ຽນແປງສົມມຸດຖານໃນການກຳນົດມູນຄ່າເກັບກູ້ຄືນຂອງຊັບສິນນັບຕັ້ງແຕ່ການເສື່ອມຄ່າຄັ້ງສຸດທ້າຍໄດ້ຖືກຮັບຮູ້. ການເກັບຄືນແມ່ນມີຂໍ້ຈຳກັດວ່າມູນຄ່າຕາມບັນຊີຂອງຊັບສິນຕ້ອງບໍ່ເກີນມູນຄ່າທີ່ຕ້ອງການເກັບກູ້ຄືນ ຫລື ບໍ່ເກີນມູນຄ່າຕາມບັນຊີທີ່ຖືກກຳນົດຫັກລົບຄ່າຫລຸ້ຍຫ້ຽນ, ບໍ່ມີຄ່າເສື່ອມຂອງຊັບສິນໄດ້ຖືກບັນທຶກໃນປີຜ່ານມາການເກັບຄືນນັ້ນຈະຖືກຮັບຮູ້ໃນບົດລາຍງານຜົນໄດ້ຮັບ.

#### *2.5.11 ອາກອນລາຍໄດ້*

*ອາກອນພາຍໃນປີ*

ອາກອນຊັບສິນ ແລະ ໜີ້ສິນໃນປີປະຈຸບັນ ແລະ ປີກ່ອນແມ່ນຖືກວັດແທກຕາມມູນຄ່າທີ່ຄາດການໄວ້ເພື່ອການເກັບກູ້ເງິນຄືນ ຫຼື ຊຳລະເງິນໃຫ້ແກ່ເຈົ້າໜ້າທີ່ .ອັດຕາອາກອນ ແລະ ກົດໝາຍອາກອນໄດ້ນຳໃຊ້ເພື່ອຄິດໄລ່ຈຳນວນເງິນທີ່ຖືກສະແດງໃຫ້ເຫັນນະມື້ລາຍງານ.

*ອາກອນເຍື້ອນຊຳລະ*

ຖືກຄິດໄລ່ໂດຍນຳໃຊ້ວິທີຄິດໄລ່ສ່ວນຜິດດ່ຽງຊົ່ວຄາວຫັກອອກໄດ້ມື້ເຮັດໃບລາຍງານລະຫວ່າງອາກອນພື້ນຖານຂອງຊັບສິນ ແລະ ໜີ້ສິນ ແລະ ຍອດຍົກມາດັ່ງກ່າວ ເພື່ອເຮັດບົດລາຍງາການເງິນ. ໜີ້ສິນອາກອນຍົກໄປຫັກຕໍ່ແມ່ນຖືກຮັບຮູ້ເປັນສ່ວນຜິດດ່ຽງຊົ່ວຄາວຖືກເສຍອາກອນຕໍ່ໜ້າ, ຍົກເວັ້ນ: ເມື່ອອາກອນເຍື້ອນຊຳລະໜີ້ສິນເພີ່ມຂຶ້ນຈາກການຮັບຮູ້ເບື້ອງຕົ້ນຂອງຊັບສິນ ຫລື ໜີ້ສິນ ໃນທຸລະກຳທີ່ໃນເວລານັ້ນທຸລະກຳບໍ່ມີຜົນກະທົບຕໍ່ກຳໄລທາງດ້ານບັນຊີ ຫລື ກຳໄລ ແລະ ຂາດທຶນທີ່ຖືກເສຍອາກອນ.

ຊັບສິນອາກອນຍົກໄປຫັກຕໍ່ແມ່ນໃຊ້ສຳລັບບັນດາລາຍຈ່າຍທີ່ຍົກເວັ້ນອາກອນ, ຍອດຍົກໄປຂອງອາກອນທີ່ຈ່າຍເກີນ ແລະ ອາກອນທີ່ບໍ່ໄດ້ຈ່າຍຍ້ອນຂາດທຶນ, ໝາຍຄວາມວ່າ ອາກອນກຳໄລຈະຖືກຄິດໄລ່ໂດຍຫັກບັນດາ ລາຍຈ່າຍທີ່ຍົກເວັ້ນອາກອນ ແລະ ຍອດຍົກໄປຂອງອາກອນທີ່ຈ່າຍເກີນ ແລະ ອາກອນທີ່ບໍ່ໄດ້ຈ່າຍຍ້ອນຂາດ ທຶນນັ້ນ ສາມາດຍອມຮັບໄດ້, ຍົກເວັ້ນ: ເມື່ອຊັບສິນອາກອນຍົກໄປຫັກຕໍ່ທີ່ກ່ຽວຂ້ອງກັບບັນດາລາຍຈ່າຍທີ່ບໍ່ຕ້ອງຫັກອາກອນ, ສ່ວນຜິດດ່ຽງເພີ່ມຂຶ້ນຈາກມູນຄ່າຂອງຊັບສິນ ແລະ ໜີ້ສິນທີ່ຖືກຮັບຮູ້ເບື້ອງຕົ້ນໃນລາຍການທີ່ບໍ່ໄດ້ລວມເຂົ້າໃນທຸລະກິດ ແລະ, ໃນເວລາທີ່ການເຄື່ອນໄຫວບໍ່ມີຜົນກະທົບຕໍ່ກຳໄລທາງດ້ານບັນຊີ ຫລື ກຳໄລ ຫລື ຂາດທຶນທາງດ້ານອາກອນ.

### 2. ນະໂຍບາຍການບັນຊີ (ຕໍ່)

### *2.5 ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)*

#### *2.5.11 ອາກອນລາຍໄດ້ (ຕໍ່)*

ມູນຄ່າຍອດຍົກມາຂອງໜີ້ຕ້ອງຮັບອາກອນເຍື້ອນຊຳລະ ຈະຖືກກວດສອບເປັນແຕ່ລະເທື່ອ ຕາມວັນທີຂອງໃບສະຫຼຸບຊັບສິນບັດ ແລະ ສ່ວນທີ່ບໍ່ເປັນປະໂຫຍດແກ່ໜີ້ຕ້ອງສົ່ງອາກອນເຍື້ອນຊຳລະຈະຖືກຕັດລົງ. ຖ້າໃນກໍລະນີທີ່ລາຍການດັ່ງກ່າວໜ້າຈະບໍ່ສາມາດໃຊ້ສິ່ງອາກອນເຍື້ອນຊຳລະເຫລົ່ານີ້ ເນື່ອງຈາກຄາດວ່າໜ້າຈະບໍ່ມີອາກອນກຳໄລຊັບສິນເຍື້ອນຊຳລະທີ່ບໍ່ຖືກຮັບຮູ້ຈະຖືກປະເມີນຊ້ຳນະມື້ຂອງໃບສະຫລຸບຊັບສິນບັດ ແລະ ຄາດວ່າມູນຄ່າທີ່ໄດ້ຖືກຮັບຮູ້ຄືນໃໝ່ນັ້ນຈະສາມາດນຳໃຊ້ ແລະ ເມື່ອມີການຄິດໄລ່ອາກອນກຳໄລໃນອະນາຄົດຈະອະນຸຍາດໃຫ້ເກັບຄືນມູນຄ່າເຫລົ່ານີ້ໄດ້.

ໜີ້ຕ້ອງຮັບ ແລະ ໜີ້ຕ້ອງສົ່ງອາກອນເຍື້ອນຊຳລະແມ່ນຖືກໄລ່ລຽງຕາມອັດຕາອາກອນທີ່ຄາດວ່າຈະນຳໄປໃຊ້ ພາຍໃນປີທີ່ມີການຂາຍຊັບສິນ ຫຼື ຊຳລະໜີ້ສິນ, ອີງຕາມອັດຕາອາກອນ)ແລະ ກົດໝາຍສ່ວຍສາອາກອນ(ທີ່ມີການປະກາດໃຊ້ນະມື້ຂອງໃບລາຍງານຖານະການເງິນ.

ໜີ້ຕ້ອງຮັບ ແລະ ໜີ້ຕ້ອງສົ່ງອາກອນເຍື້ອນຊຳລະແມ່ນໄດ້ຫັກລ້າງ, ຖ້າຫາກມີສິດການບັງຄັບໃຊ້ທາງກົດໝາຍເພື່ອເຮັດໃຫ້ເກີດອາກອນຊັບສິນປະຈຸບັນ ແລະ ໜີ້ຕ້ອງສົ່ງອາກອນກຳໄລປະຈຸບັນ ແລະ ອາກອນເຍື້ອນຊຳລະທີ່ຕ່າງກໍ່ກ່ຽວຂ້ອງກັບສາຂາ ແລະ ໜ່ວຍງານສ່ວຍສາອາກອນ.

#### *2.5.12 ຊັບສິນທີ່ໄດ້ຮັບໝອບໝາຍອຳນາດ (ຊັບສິນທີ່ທະນາຄານບໍ່ໄດ້ຖືກຳມະສິດ)*

ສາຂາໄດ້ໃຫ້ບໍລິການກ່ຽວກັບກອງທຶນ ແລະ ການບໍລິການບໍລິຫານຊັບສິນ ເຊິ່ງເປັນຜົນເຮັດໃຫ້ທະນາຄານໄດ້ຖືຄອງ ຫຼື ໄດ້ຮັບສິດໃນການລົງທຶນໃນນາມລູກຄ້າຂອງທະນາຄານ. ຊັບສິນດັ່ງກ່າວ ບໍ່ໄດ້ຖືກສະແດງໃນເອກະສານລາຍງານການເງິນຂອງທະນາຄານ, ເນື່ອງຈາກຊັບສິນເຫຼົ່ານັ້ນ ບໍ່ແມ່ນຊັບສິນຂອງສາຂາ.

#### *2.5.13 ຜົນປະໂຫຍດຂອງພະນັກງານ*

*ຜົນປະໂຫຍດເມື່ອອອກການ*

ອີງຕາມມາດຕາ 82 ຂອງກົດໝາຍແຮງງານ ອອກໂດຍປະທານປະເທດ ແຫ່ງ ສປປ ລາວ, ສະບັບເລກທີ 43/ສພຊ ລົງວັນທີ 20 ມັງກອນ 2014, ສາຂາ ມີພັນທະຈ່າຍເງິນຊົດເຊີຍໃຫ້ແກ່ພະນັກງານຜູ່ທີ່ລາອອກ ອີງຕາມລາຍ ລະອຽດລຸ່ມນີ້:

- ກໍລະນີພະນັກງານຂາດທັກສະຄວາມຊຳນິຊຳນານ ຫລື ມີສຸຂະພາບບໍ່ດີ ແລະ ບໍ່ສາມາດສືບຕໍ່ເຮັດວຽກໄດ້;
- ກໍລະນີສາຂາ ພິຈາລະນາວ່າຈຳເປັນຕ້ອງຫລຸດພະນັກງານ ເພື່ອປັບປຸງອີງການຈັດຕັ້ງຂອງການເຮັດວຽກໃນໜ່ວຍງານແຮງງານ.

ສຳລັບຜົນປະໂຫຍດຂອງພະນັກງານທີ່ເກີດຈາກ 2 ກໍລະນີທີ່ໄດ້ກ່າວມາຂ້າງເທິງນັ້ນ, ສາຂາ ຕ້ອງໄດ້ຈ່າຍເງິນຊົດເຊີຍໃຫ້ພະນັກງານ ໂດຍຄິດໄລ່ໃນອັດຕາ 10% ຂອງເງິນເດືອນພື້ນຖານຂອງພະນັກງານທີ່ຖືກໄລ່ອອກ ໄດ້ຮັບກ່ອນອອກວຽກ. ນະວັນທີ 31 ທັນວາ 2015, ບໍ່ມີພະນັກງານສາຂາຖືກ ໄລ່ອອກຍ້ອນສາເຫດຂ້າງເທິງ, ດັ່ງນັ້ນ, ສາຂາຈຶ່ງບໍ່ໄດ້ຄິດໄລ່ລາຍຈ່າຍສ່ວນນີ້ໄວ້ໃນເອກະສານລາຍງານການເງິນ ຂອງສາຂາ.

#### *2.5.14 ມາດຕະຖານທີ່ໄດ້ອອກແລ້ວ ແຕ່ຍັງບໍ່ມີຜົນບັງຄັບໃຊ້*

ມາດຕະຖານ ແລະ ການຕີຄວາມໝາຍທີ່ໄດ້ວາງອອກ ແຕ່ຍັງບໍ່ມີຜົນບັງຄັບໃຊ້ຈົດຮອດມື້ອອກເອກະສານລາຍງານການເງິນສະບັບນີ້ ແມ່ນໄດ້ຖືກເປີດເຜີຍຂ້າງລຸ່ມ. ທະນາຄານມີຄວາມຕັ້ງໃຈທີ່ຈະນຳໃຊ້ບັນດາມາດຕະຖານເຫລົ່ານີ້ ເມື່ອມີຜົນນຳໃຊ້ໄດ້ຢ່າງເປັນທາງການ.

## 2. ນະໂຍບາຍການບັນຊີ (ຕໍ່)

### 2.5 *ສະຫຼຸບະໂຍບາຍການບັນຊີທີ່ສຳຄັນ (ຕໍ່)*

#### 2.5.14 *ມາດຕະຖານທີ່ໄດ້ອອກແລ້ວ ແຕ່ຍັງບໍ່ມີຜົນບັງຄັບໃຊ້ (ຕໍ່)*

*IFRS 9 ເຄື່ອງມືການເງິນ*

ໃນເດືອນກໍລະກົດ 2014, IASB ໄດ້ປະກາດໃຊ້ມາດຕະຖານສາກົດດ້ານການລາຍງານ ເລກທີ 9 ເຄື່ອງມືທາງການເງິນ ເຊິ່ງໄດ້ມີຜົນຕໍ່ເຄື່ອງມືທາງການເງິນທັງໝົດ ແລະ ປ່ຽນແທນມາດຕະຖານສາກົນດ້ານການລາຍງານການເງິນ ເລກທີ 39 ເຄື່ອງມືທາງການເງິນ: ການຮັບຮູ້ ແລະ ການວັດແທກ ແລະ ມາດຕະຖານສາກົນດ້ານການລາຍງານການເງິນ ເລກທີ 9 ສະບັບເກົ່າ. ມາດຕະຖານໄດ້ແນະນຳວິທີໃນການຈັດປະເພດ ແລະ ການວັດແທກມູນຄ່າ, ການຫັກຄ່າເສື່ອມ ແລະ ການບັນຊີ. ມາດຕະຖານສາກົນດ້ານການລາຍງານການເງິນ ເລກທີ 9 ມີຜົນບັງຄັບໃຊ້ຫຼັງຈາກວັນທີ 1 ມັງກອນ 2018. ຮູບແບບການລາຍງານແບບເກົ່າແມ່ນຕ້ອງຖືກນຳໃຊ້, ແຕ່ຂໍ້ມູນສົມທຽບແມ່ນບໍ່ໄດ້ບັງຄັບໃຊ້. ການຮັບເອົາມາດຕະຖານສາກົນດ້ານການລາຍງານ ເລກທີ 9 ຈະມີຜົນຕໍ່ການຈັດປະເພດ ແລະ ການວັດແທກມູນຄ່າຂອງຊັບສິນທາງການເງິນຂອງສາຂາ, ແຕ່ບໍ່ມີຜົນໃນການຈັດປະເພດ ແລະ ການວັດແທກມູນຄ່າຂອງໜີ້ສິນຂອງສາຂາ.

## 3. ລາຍຮັບຈາກດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ

| | *ສຳລັບໄລຍະແຕ່ວັນທີ 26 ມີນາ 2015 ເຖິງ ວັນທີ 31 ທັນວາ 2015* |
|---|---|
| | *ລ້ານກີບ* |
| ລາຍຮັບດອກເບ້ຍຈາກທຸລະກຳລະຫວ່າງທະນາຄານ | 17 |
| ລາຍຮັບດອກເບ້ຍຈາກເງິນກູ້ໃຫ້ລູກຄ້າ | 2,611 |
| ລາຍຮັບດອກເບ້ຍຈາກການລົງທຶນໃນຫຼັກຊັບຖືໄວ້ຈົນຄົບກຳນົດ | 3,925 |
| | **6,553** |

## 4. ລາຍຈ່າຍດອກເບ້ຍ ແລະ ລາຍຈ່າຍທີ່ຄ້າຍຄືກັນ

| | *ສຳລັບໄລຍະແຕ່ວັນທີ 26 ມີນາ 2015 ເຖິງ ວັນທີ 31 ທັນວາ 2015* |
|---|---|
| | *ລ້ານກີບ* |
| ລາຍຈ່າຍດອກເບ້ຍຈາກເງິນຝາກຂອງທະນາຄານອື່ນ | 1,378 |
| ລາຍຈ່າຍດອກເບ້ຍເງິນຝາກຂອງລູກຄ້າ | 127 |
| | **1,505** |

## 5. ລາຍຮັບສຸດທິຈາກຄ່າທຳນຽມ ແລະ ການບໍລິການ

| | *ສຳລັບໄລຍະແຕ່ວັນທີ 26 ມີນາ 2015 ເຖິງ ວັນທີ 31 ທັນວາ 2015* |
|---|---|
| | *ລ້ານກີບ* |
| **ລາຍຮັບຈາກຄ່າທຳນຽມ ແລະ ການບໍລິການຈາກ** | |
| ການບໍລິການຊຳລະສາງ | 178 |
| ອື່ນໆ | 2 |
| | **180** |

## 6. ກຳໄລສຸດທິຈາກການຊື້ຂາຍເງິນຕາຕ່າງປະເທດ

| | *ສຳລັບໄລຍະແຕ່ວັນທີ 26 ມີນາ 2015 ເຖິງ ວັນທີ 31 ທັນວາ 2015* |
|---|---|
| | *ລ້ານກີບ* |
| ກຳໄລຈາກສ່ວນຕ່າງການຊື້ຂາຍເງິນຕາຕ່າງປະເທດ | 404 |
| ຂາດທຶນຈາກສ່ວນຕ່າງການຊື້ຂາຍເງິນຕາຕ່າງປະເທດ | (10) |
| | **394** |

## 7. ເງິນເດືອນ ແລະ ລາຍຈ່າຍອື່ນໆກ່ຽວກັບພະນັກງານ

| | *ສຳລັບໄລຍະແຕ່ວັນທີ 26 ມີນາ 2015 ເຖິງ ວັນທີ 31 ທັນວາ 2015* |
|---|---|
| | *ລ້ານກີບ* |
| ຄ່າແຮງງານ ແລະ ເບັຍລ້ຽງ | 5,540 |
| ລາຍຈ່າຍອື່ນໆໃຫ້ພະນັກງານ | 2,865 |
| | **8,405** |

## 8. ລາຍຈ່າຍບໍລິຫານອື່ນໆ

| | *ສໍາລັບໄລຍະແຕ່ວັນທີ 26 ມີນາ 2015 ເຖິງ ວັນທີ 31 ທັນວາ 2015* |
|---|---|
| | *ລ້ານກີບ* |
| ຄ່າເຊົ່າຫ້ອງການ | 2,184 |
| ຄ່າບໍລິການພາຍນອກ | 484 |
| ຄ່າສ້ອມແປງ ແລະ ບໍາລຸງຮັກສາ | 66 |
| ຄ່າຕີພິມ, ການຕະຫຼາດ ແລະ ການສົ່ງເສີມການຂາຍ | 195 |
| ຄ່າໂທລະຄົມມະນາຄົມ | 716 |
| ຄ່າຝຶກອົບຮົມ, ປະຊຸມ ແລະ ສໍາມະນາ | 3,496 |
| ຄ່ານໍ້າ ແລະ ຄ່າໄຟຟ້າ | 227 |
| ຄ່າກວດສອບ ແລະ ນັກກົດໝາຍ | 102 |
| ລາຍຈ່າຍອື່ນໆ | 1,654 |
| | **9,124** |

## 9. ເງິນສົດ ແລະ ບັນຊີຝາກຢູ່ທະນາຄານແຫ່ງ ສປປ ລາວ ("ທຫລ")

| | *31 ທັນວາ 2015* |
|---|---|
| | *ລ້ານກີບ* |
| ເງິນສົດໃນກໍາມືເປັນເງິນກີບ | 1,486 |
| ເງິນສົດໃນກໍາມືເປັນເງິນຕາຕ່າງປະເທດ | 2,774 |
| ເງິນຝາກກັບ ທຫລ | **367,863** |
| - ເງິນຝາກກະແສລາຍວັນ | *335,498* |
| - ເງິນຝາກພາກບັງຄັບ | *4,740* |
| - ເງິນຝາກຄໍ້າປະກັນທຶນຈົດທະບຽນ | *27,625* |
| | **372,123** |

ເງິນຝາກກັບ ທຫລ ແມ່ນບໍ່ມີດອກເບ້ຍ.

ຕາມຂໍ້ກໍານົດຂອງ ທຫລ, ທະນາຄານໄດ້ຖືກຮຽກຮ້ອງ ໃຫ້ຮັກສາເງິນແຮເງິນສົດໄວ້ກັບທະນາຄານ ແຫ່ງ ສປປ ລາວ ໃນຮູບແບບເງິນຝາກພາກບັງຄັບເຊິ່ງ ຖືກຄິດໄລ່ ໃນອັດຕາ 5.00% ສໍາລັບເງິນກີບ ແລະ 10.00% ສໍາລັບສະກຸນເງິນຕາຕ່າງປະເທດ, ໃນທຸກໆ 2 ຄັ້ງຕໍ່ເດືອນ ຂອງຍອດເງິນຝາກລູກຄ້າທີ່ມີກໍານົດຕໍ່າກ່ວາ 12 ເດືອນ.

ພາຍໃນປີ, ສາຂາໄດ້ຮັກສາເງິນຝາກພາກບັງຄັບ ເພື່ອໃຫ້ສອດຄ່ອງຕາມຂໍ້ກໍານົດ ຂອງທະນາຄານແຫ່ງ ສປປ ລາວ.

## 10. ໜີ້ຕ້ອງຮັບຈາກທະນາຄານອື່ນ

ໜີ້ຕ້ອງຮັບຈາກທະນາຄານອື່ນ ນະວັນທີ 31 ທັນວາ 2015 ປະກອບດ້ວຍເງິນຝາກກະແສລາຍວັນເປັນເງິນຕາຕ່າງປະເທດ ເຊິ່ງມີລາຍລະອຽດດັ່ງນີ້:

| | *31 ທັນວາ 2015*<br>*ລ້ານກີບ* |
|---|---|
| **ເງິນຝາກກັບທະນາຄານພາຍໃນປະເທດ** | **984** |
| - ທະນາຄານ ອຸດສະຫະກໍາ ແລະ ການຄ້າຈີນ ຈໍາກັດ ສາຂານະຄອນຫຼວງວຽງຈັນ (ໄອຊີບີຊີ) | 984 |
| **ເງິນຝາກກັບທະນາຄານຕ່າງປະເທດ** | **36,791** |
| - ທະນາຄານແຫ່ງປະເທດຈີນ, ສາຂາຊຽງໄຮ້ | 6,019 |
| - ທະນາຄານແຫ່ງປະເທດຈີນ, ສໍານັກງານໃຫຍ່ | 28,889 |
| - ທະນາຄານແຫ່ງປະເທດຈີນ, ສາຂາແຟັງເຟີດ | 809 |
| - ທະນາຄານແຫ່ງປະເທດຈີນ, ສາຂາໄທ | 1,074 |
| **ດອກເບ້ຍສະສົມ** | **2** |
| | **37,777** |

## 11. ລົງທຶນໃນຫຼັກຊັບ

| | *31 ທັນວາ 2015*<br>*ລ້ານກີບ* |
|---|---|
| **ຫຼັກຊັບຖືໄວ້ຈົນຄົບກໍານົດ** | |
| ພັນທະບັດອອກໂດຍ ທຫລ | 407,400 |
| **ດອກເບ້ຍສະສົມ** | **3,925** |
| | **411,325** |

ພັນທະບັດອອກໂດຍ ທຫລ ມີໄລຍະເວລາ 5 ປີ ແລະ ມີດອກເບ້ຍໃນອັດຕາຄົງທີ່ 4.82% ຕໍ່ປີ.

## 12. ເງິນກູ້ແກ່ລູກຄ້າ

| | *31 ທັນວາ 2015*<br>*ລ້ານກີບ* |
|---|---|
| ລວມເງິນກູ້ຢືມທັງໝົດໃຫ້ແກ່ລູກຄ້າ | 97,888 |
| ດອກເບ້ຍຄ້າງຮັບ | 271 |
| ລົບ: ເງິນແຮຄ່າເສື່ອມໜີ້ເສຍ (ບົດອະທິບາຍເລກທີ 13) | (979) |
| | **97,180** |

## 12. ເງິນກູ້ແກ່ລູກຄ້າ (ຕໍ່)

ອັດຕາດອກເບ້ຍສຳລັບເງິນກູ້ຢືມໃຫ້ແກ່ລູກຄ້າພາຍໃນປີມີດັ່ງນີ້:

| | ສຳລັບໄລຍະວັນທີ 26 ມີນາ 2015 ເຖິງ ວັນທີ 31 ທັນວາ 2015 ອັດຕາດອກເບ້ຍ % ຕໍ່ປີ |
|---|---|
| ເງິນກູ້ ທີ່ເປັນສະກຸນເງິນ ກີບ | 11% |
| ເງິນກູ້ ທີ່ເປັນສະກຸນເງິນ ໂດລາສະຫະລັດ | 7.04% |

***ການວິເຄາະເງິນກູ້ຢືມໃຫ້ກັບລູກຄ້າ***

*ວິເຄາະຕາມສະກຸນເງິນ*

| | *31 ທັນວາ 2015* *ລ້ານກີບ* |
|---|---|
| ເງິນກູ້ ທີ່ເປັນສະກຸນເງິນ ກີບ | 48,888 |
| ເງິນກູ້ ທີ່ເປັນສະກຸນເງິນ ໂດລາສະຫະລັດ | 49,000 |
| | **97,888** |

*ວິເຄາະຕາມໄລຍະເວລາເດີມ*

| | *31 ທັນວາ 2015* *ລ້ານກີບ* |
|---|---|
| ເງິນກູ້ໄລຍະສັ້ນ | - |
| ເງິນກູ້ໄລຍະກາງ | 97,888 |
| ເງິນກູ້ໄລຍະຍາວ | - |
| | **97,888** |

*ວິເຄາະຕາມພາກສ່ວນເສດຖະກິດ*

| | *31 ທັນວາ 2015* *ລ້ານກີບ* |
|---|---|
| ບໍລິສັດກໍ່ສ້າງ | 49,000 |
| ບໍລິສັດກະສິກຳ | 48,888 |
| | **97,888** |

## 13. ເງິນແຮສໍາລັບໜີ້ເສຍ

ການເຄື່ອນໄຫວເງິນແຮຄ່າເສື່ອມໜີ້ເສຍປະກອບມີດັ່ງນີ້:

| | *ສໍາລັບໄລຍະແຕ່ວັນທີ 26 ມີນາ 2015 ເຖິງ ວັນທີ 31 ທັນວາ 2015*<br>*ລ້ານກີບ* |
|---|---|
| **ຍອດຍົກມາ** | - |
| ລາຍຈ່າຍໜີ້ເສຍ | 979 |
| **ຍອດເຫຼືອທ້າຍ** | 979 |

## 14. ຊັບສິນບັດ ແລະ ອຸປະກອນ

ການເຄື່ອນໄຫວຂອງຊັບສິນບັດ ແລະ ອຸປະກອນ ສໍາລັບໄລຍະແຕ່ວັນທີ 26 ມີນາ 2015 ເຖິງ ວັນທີ 31 ທັນວາ 2015 ດັ່ງນີ້:

| | *ອາຄານ ແລະ ການປັບປຸງ*<br>*ລ້ານກີບ* | *ເຟີນີເຈີ ແລະ ສິ່ງຕິດຕັ້ງ*<br>*ລ້ານກີບ* | *ອຸປະກອນ ຄອມພິວເຕີ*<br>*ລ້ານກີບ* | *ພາຫະນະ*<br>*ລ້ານກີບ* | *ລວມ*<br>*ລ້ານກີບ* |
|---|---|---|---|---|---|
| **ຕົ້ນທຶນ** | | | | | |
| ຍອດຍົກມາ | - | - | - | - | - |
| ຊື້ເຂົ້າໃນປີ | 7,448 | 4,912 | 2,011 | 1,176 | 15,547 |
| ຍອດເຫຼືອທ້າຍ | 7,448 | 4,912 | 2,011 | 1,176 | 15,547 |
| **ຄ່າຫຼຸ້ຍຫ້ຽນສະສົມ:** | | | | | |
| ຍອດຍົກມາ | - | - | - | - | - |
| ຄ່າຫຼຸ້ຍຫ້ຽນພາຍໃນໄລຍະ | 1,118 | 715 | 488 | 154 | 2,475 |
| ຍອດເຫຼືອທ້າຍ | 1,118 | 715 | 488 | 154 | 2,475 |
| **ມູນຄ່າສຸດທິ:** | | | | | |
| ຍອດຍົກມາ | - | - | - | - | - |
| ຍອດເຫຼືອທ້າຍ | 6,330 | 4,197 | 1,523 | 1,022 | 13,072 |

## 15. ຊັບສິນອື່ນໆ

| | *31 ທັນວາ 2015*<br>*ລ້ານກີບ* |
|---|---|
| ລາຍຈ່າຍລ່ວງໜ້າ | 19,669 |
| | **19,669** |

## 16. ໜີ້ຕ້ອງສົ່ງທະນາຄານອື່ນ

| | *31 ທັນວາ 2015* |
|---|---|
| | *ລ້ານກີບ* |
| **ເງິນຝາກກະແສລາຍວັນຈາກທະນາຄານພາຍໃນ** | |
| ທະນາຄານ ANZ, ສາຂາປະເທດລາວ | 30,000 |
| **ກູ້ຢືມຈາກທະນາຄານຕ່າງປະເທດ** | |
| ທະນາຄານແຫ່ງປະເທດຈີນ, ສໍານັກງານໃຫຍ່ | 407,400 |
| ດອກເບ້ຍສະສົມ | 1,378 |
| | **438,778** |

ກູ້ຢືມຈາກທະນາຄານແຫ່ງປະເທດຈີນ, ສໍານັກງານໃຫຍ່ ແມ່ນເປັນສະກຸນເງິນໂດລາ, ມີໄລຍະເວລາ 5 ປີ ແລະ ມີອັດຕາດອກເບ້ຍ 1.67% ຕໍ່ປີ.

## 17. ໜີ້ຕ້ອງສົ່ງລູກຄ້າ

| | *31 ທັນວາ 2015* |
|---|---|
| | *ລ້ານກີບ* |
| **ເງິນຝາກກະແສລາຍວັນ** | |
| - ເປັນເງິນກີບ | 2,630 |
| - ເປັນເງິນຕາຕ່າງປະເທດ | 49,046 |
| | **51,676** |
| **ເງິນຝາກປະຢັດ** | |
| - ເປັນເງິນກີບ | 1,622 |
| - ເປັນເງິນຕາຕ່າງປະເທດ | 16,561 |
| | **18,183** |
| **ເງິນຝາກປະຈໍາ** | |
| - ເປັນເງິນກີບ | 1,093 |
| - ເປັນເງິນຕາຕ່າງປະເທດ | 2,140 |
| | **3,233** |
| **ດອກເບ້ຍສະສົມ** | **38** |
| | **73,130** |

## 17. ໜີ້ຕ້ອງສົ່ງລູກຄ້າ (ຕໍ່)

ອັດຕາດອກເບ້ຍຂອງມູນຄ່າທີ່ຕ້ອງສົ່ງໃຫ້ລູກຄ້າໃນລະຫວ່າງປີມີດັ່ງນີ້:

| | *ສຳລັບໄລຍະແຕ່ ວັນທີ 26 ມີນາ 2015 ເຖິງ ວັນທີ 31 ທັນວາ 2015*<br>*ລ້ານກີບ*<br>*ອັດຕາດອກເບ້ຍ % ຕໍ່ປີ* |
|---|---|
| ເງິນຝາກກະແສລາຍວັນເປັນກີບ | ບໍ່ມີດອກເບ້ຍ |
| ເງິນຝາກກະແສລາຍວັນເປັນເງິນຕາຕ່າງປະເທດ | ບໍ່ມີດອກເບ້ຍ |
| ເງິນຝາກປະຢັດເປັນເງິນກີບ | 1.00% |
| ເງິນຝາກປະຢັດເປັນເງິນໂດລາ | 1.25% |
| ເງິນຝາກປະຢັດເປັນເງິນບາດ | 0.50% |
| ເງິນຝາກປະຈຳເປັນເງິນກີບ | 3.00% - 9.00% |
| ເງິນຝາກປະຈຳເປັນເງິນໂດລາ | 2.00% - 6.25% |
| ເງິນຝາກປະຈຳເປັນເງິນບາດ | 0.75% - 4.50% |

## 18. ໜີ້ສິນອື່ນໆ

| | *31 ທັນວາ 2015*<br>*ລ້ານກີບ* |
|---|---|
| ໜີ້ຕ້ອງສົ່ງໃຫ້ ທະນາຄານແຫ່ງປະເທດຈີນ, ສຳນັກງານໃຫຍ່ | 45,776 |
| ໜີ້ຕ້ອງສົ່ງໃຫ້ພະນັກງານ | 3,679 |
| ອື່ນໆ | 101 |
| | **49,556** |

**19. ໜີ້ສິນອາກອນ**

| | *31 ທັນວາ 2015* *ລ້ານກີບ* |
|---|---|
| ອາກອນລາຍໄດ້ສ່ວນບຸກຄົນຕ້ອງສົ່ງ | 180 |
| ອາກອນກໍາໄລຕ້ອງສົ່ງ | - |
| | **180** |

*ອາກອນກໍາໄລ ("PT")*

ສາຂາມີພັນທະຕ້ອງຈ່າຍອາກອນໃນອັດຕາ 24% ຈາກກໍາໄລ ລວມກ່ອນຫັກອາກອນ ໂດຍສອດຄ່ອງຕາມກົດໝາຍວ່າດ້ວຍສ່ວຍສາອາກອນ ສະບັບເລກທີ 05/ສພຊ, ລົງວັນທີ່ 20 ທັນວາ 2011 ເຊິ່ງມີຜົນບັງຄັບໃຊ້ໃນ ຫຼື ຫຼັງວັນທີ 01 ມັງກອນ 2013.

| | *ສໍາລັບໄລຍະແຕ່ວັນທີ 26 ມີນາ 2015 ເຖິງ ວັນທີ 31 ທັນວາ 2015* *ລ້ານກີບ* |
|---|---|
| ຂາດທຶນກ່ອນອາກອນ ພາຍໃຕ້ IFRS | (15,418) |
| ສ່ວນຕ່າງລະຫວ່າງ IFRS ແລະ LAS | 1,313 |
| **ຂາດທຶນພາຍໃຕ້ມາດຕະຖານລາວ** | **(14,105)** |
| ປັບທຽບອາກອນທີ່ເກີດຈາກຄວາມແຕກຕ່າງລະຫວ່າງການປະຕິບັດທາງການບັນຊີ ແລະ ກົດໝາຍສ່ວຍສາອາກອນ | 745 |
| **ອາກອນລາຍໄດ້ພາຍໃຕ້ມາດຕະຖານລາວ** | **(13,360)** |
| **ລາຍຈ່າຍອາກອນກໍາໄລໃນປີ, ຕາມອັດຕາກົດໝາຍ 24%** | **-** |
| ອາກອນກໍາໄລທີ່ຕ້ອງຈ່າຍໃນໄລຍະ | - |
| ອາກອນກໍາໄລທີ່ໄດ້ຈ່າຍພາຍໃນໄລຍະ | - |
| **ອັດຕາອາກອນທີ່ຕ້ອງຈ່າຍໃນທ້າຍປີ** | **-** |

ລາຍການເສຍພາສີຂອງສາຂາຂຶ້ນຢູ່ກັບການກວດສອບຂອງເຈົ້າໜ້າທີ່ສ່ວຍສາອາກອນ ເນື່ອງຈາກກົດໝາຍ ແລະ ກົດລະບຽບທາງດ້ານສ່ວຍສາອາກອນ ແມ່ນຖືກນໍາໃຊ້ກັບລາຍການເຄື່ອນໄຫວຫຼາຍປະເທດ ເຊິ່ງອາດຈະມີການຕີຄວາມໝາຍທີ່ແຕກຕ່າງກັນ, ຈໍານວນເງິນທີ່ໄດ້ສະແດງຢູ່ໃນເອກະສານລາຍງານການເງິນ ອາດຈະຖືກປ່ຽນແປງຫຼັງຈາກມື້ໄລ່ລຽງສຸດທ້າຍຂອງເຈົ້າໜ້າທີ່ສ່ວຍສາອາກອນ.

## 20. ທຶນຈົດທະບຽນຖອກແລ້ວ

ການເຄື່ອນໄຫວ ທຶນຈົດທະບຽນຖອກແລ້ວພາຍໃນໄລຍະ ມີດັ່ງຕໍ່ໄປນີ້:

| | *ສໍາລັບໄລຍະແຕ່ວັນທີ 26 ມີນາ 2015 ເຖິງ ວັນທີ 31 ທັນວາ 2015* *ລ້ານກີບ* |
|---|---|
| ຍອດຍົກມາ | - |
| ທຶນຈົດທະບຽນຖອກເພີ່ມພາຍໃນປີ | 405,100 |
| **ຍອດເຫຼືອທ້າຍ** | **405,100** |

## 21. ຂໍ້ມູນເພີ່ມເຕີມກ່ຽວກັບກະແສເງິນສົດ

ເງິນສົດ ແລະ ລາຍການທຽບເທົ່າເງິນສົດ

| | *31 ທັນວາ 2015* *ລ້ານກີບ* |
|---|---|
| ເງິນສົດໃນກໍາມື | 4,260 |
| ເງິນຝາກກະແສລາຍວັນຢູ່ທະນາຄານກາງ | 335,498 |
| ເງິນຝາກກະແສລາຍວັນຢູ່ທະນາຄານອື່ນໆ | 37,775 |
| | **377,533** |

## 22. ບັນດາລາຍການເຄື່ອນໄຫວກັບລາຍການພາກສ່ວນທີ່ກ່ຽວຂ້ອງ

ລາຍການເຄື່ອນໄຫວກັບພາກສ່ວນອື່ນທີ່ກ່ຽວຂ້ອງແມ່ນທຸກໆລາຍການເຄື່ອນໄຫວທີ່ໄດ້ດໍາເນີນງານກັບພາກສ່ວນອື່ນເຊິ່ງມີສາຍພົວພັນກັບສາຂາ, ພາກສ່ວນທີ່ຈະກ່ຽວຂ້ອງກັບສາຂາ ຖ້າຫາກວ່າ:

(a) ແບບທາງກົງ ຫຼື ແບບທາງອ້ອມ ໂດຍຜ່ານໜຶ່ງ ຫຼື ຫຼາຍສື່ກາງ, ພາກສ່ວນອື່ນຈະຕ້ອງ:

- ມີການຄວບຄຸມ(ຖືກຄວບຄຸມໂດຍ), ຫຼື ພາຍໃຕ້ການຄວບຄຸມທົ່ວໄປກັບສາຂາ (ໃນນີ້ລວມມີບໍລິສັດແມ່, ສາຂາ ແລະ ສະມາຊິກຂອງ ສາຂາ);
- ມີຜົນປະໂຫຍດນໍາກັນກັບສາຂາເຊິ່ງສິ່ງຜົນກະທົບທີ່ໃຫຍ່ຫຼວງຕໍ່ກັບສາຂາ; ຫຼື
- ມີສ່ວນຮ່ວມໃນການຄວບຄຸມສາຂາ.

(b) ພາກສ່ວນດັ່ງກ່າວແມ່ນມີຮຸ້ນສ່ວນນໍາສາຂາ

(c) ພາກສ່ວນທີ່ກ່ຽວຂ້ອງແມ່ນສະມາຊິກຄົນສໍາຄັນຂອງຜູ້ບໍລິຫານຫຼັກຂອງສາຂາ ຫຼື ບໍລິສັດແມ່;

(d) ພາກສ່ວນທີ່ກ່ຽວຂ້ອງແມ່ນສະມາຊິກທີ່ໃກ້ຊິດຂອງຄອບຄົວຂອງບຸກຄົນສະເພາະທີ່ໄດ້ກ່າວເຖິງໃນຂໍ້ (a) ຫຼື (d);

(e) ພາກສ່ວນທີ່ກ່ຽວຂ້ອງ ກໍ່ແມ່ນຜູ້ທີ່ຄວບຄຸມທະນາຄານ, ມີສ່ວນຮ່ວມໃນການຄວບຄຸມ ຫຼືອິດທິພົນອັນໃຫຍ່ຫຼວງ, ຫຼື ມີສິດທິອໍານາດການໃນການອອກສຽງສ່ວນໃຫຍ່ຕໍ່ ທະນາຄານທີ່ດໍາເນີນທຸລະກິດຢູ່, (ໂດຍທາງກົງ ຫຼື ທາງອ້ອມ), ທຸກໆພາກສ່ວນທີ່ໄດ້ກ່າວເຖິງໃນຂໍ້(c) ຫຼື (d); ຫຼື

(f) ພາກສ່ວນທີ່ກ່ຽວຂ້ອງແມ່ນແຜນຜົນປະໂຫຍດພາຍຫຼັງອອກວຽກຂອງພະນັກງານຂອງ ສາຂາ ຫຼື ທະນາຄານ ຫຼື ທະນາຄານອື່ນໆທີ່ມີສາຍພົວພັນກັບສາຂາ.

## 22. ບັນດາລາຍການເຄື່ອນໄຫວກັບລາຍການພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

ການເຄື່ອນໄຫວທີ່ສຳຄັນກັບພາກສ່ວນທີ່ກ່ຽວຂ້ອງໃນວັນທີ 31 ທັນວາ 2015 ມີດັ່ງຕໍ່ໄປນີ້:

| *ພາກສ່ວນທີ່ກ່ຽວຂ້ອງ* | *ສາຍພົວພັນ* | *ທຸລະກຳ* | *31 ທັນວາ 2015*<br>*ລ້ານກີບ* |
|---|---|---|---|
| ທະນາຄານແຫ່ງປະເທດຈີນ, ສຳນັກງານໃຫຍ່ | ທະນາຄານແມ່ | ເງິນຝາກກະແສລາຍວັນຢູ່ທະນາຄານແມ່ | 28,889 |
| | | ກູ້ຢືມຈາກທະນາຄານແມ່ | 407,400 |
| | | ໜີ້ຕ້ອງສົ່ງອື່ນໆໃຫ້ທະນາຄານແມ່ | (45,776) |

ທຸລະກຳທີ່ສຳຄັນກັບພາກສ່ວນທີ່ກ່ຽວຂ້ອງ ໃນໄລຍະແຕ່ວັນທີ 26 ມີນາ 2015 ເຖິງ ວັນທີ 31 ທັນວາ 2015 ມີດັ່ງນີ້:

| | *ສຳລັບໄລຍະແຕ່ວັນທີ 26 ມີນາ 2015 ເຖິງ ວັນທີ 31 ທັນວາ 2015*<br>*ລ້ານກີບ* |
|---|---|
| ລາຍຈ່າຍດອກເບ້ຍສຳລັບການກູ້ຢືມຈາກ ທະນາຄານແຫ່ງປະເທດຈີນ, ສຳນັກງານໃຫຍ່ | 1,378 |

***ການເຄື່ອນໄຫວກັບບຸກຄະລາກອນທີ່ສຳຄັນຂອງສາຂາ***

ຜົນຕອບແທນຕໍ່ກັບຄະນະບໍລິຫານມີດັ່ງນີ້:

| | *31 ທັນວາ 2015*<br>*ລ້ານກີບ* |
|---|---|
| ເງິນເດືອນ ແລະ ໂບນັດ | 1,527 |
| | **1,527** |

## 23. ນະໂຍບາຍການບໍລິຫານຄວາມສ່ຽງ

***ພາກສະເໜີ***

ຄວາມສ່ຽງໝາຍເຖິງຄວາມສ່ຽງໃນຕົວທີ່ເກີດຂຶ້ນໃນການດຳເນີນງານຂອງສາຂາ ແຕ່ມັນຖືກບໍລິຫານ)ຄຸ້ມຄອງ(ໂດຍຜ່ານຂັ້ນຕອນ, ວັດແທກ ແລະ ການຕິດຕາມຢ່າງຕໍ່ເນື່ອງອື່ນໆເພື່ອຈຳກັດ, ຂອບເຂດຄວາມສ່ຽງ ແລະ ນຳໃຊ້ການຄຸ້ມຄອງ ອື່ນໆ. ຂັ້ນຕອນການບໍລິຫານຄວາມສ່ຽງນີ້ເປັນສິ່ງທີ່ສຳຄັນຕໍ່ຄວາມສາມາດສ້າງກຳໄລຢ່າງຕໍ່ເນື່ອງຂອງສາຂາ ແລະ ແຕ່ລະ ໜ່ວຍງານພາຍໃນທະ ນາຄານແມ່ນຕ້ອງຮັບຜິດຊອບໃນການເປີດເຜີຍຄວາມສ່ຽງທີ່ຕິດພັນກັບໜ້າທີ່ຄວາມຮັບຜິດຊອບຂອງຕົນ.

ສາຂາມີຄວາມສ່ຽງທາງດ້ານສິນເຊື່ອ, ຄວາມສ່ຽງສະພາບຄ່ອງ ແລະ ຄວາມສ່ຽງທາງດ້ານຕະຫຼາດ ແລະ ຫລັງຈາກນັ້ນໄດ້ແບ່ງອອກເປັນກຸ່ມຄວາມສ່ຽງຍ່ອຍຄື: ຄວາມສ່ຽງການຄ້າ ແລະ ຄວາມສ່ຽງບໍ່ແມ່ນການຄ້າ. ນອກນັ້ນ, ສາຂາຍັງມີຄວາມສ່ຽງອື່ນໆອີກທີ່ເກີດຈາກການດຳເນີນງານ.

## 23. ນະໂຍບາຍການບໍລິຫານຄວາມສ່ຽງ (ຕໍ່)

*ພາກສະເໜີ* (ຕໍ່)

ຂະບວນການໃນການຄຸ້ມຄອງຄວາມສ່ຽງເອກະລາດບໍ່ໄດ້ລວມເອົາຄວາມສ່ຽງທຸລະກິດເຊັ່ນ: ການປ່ຽນແປງຂອງສະພາບແວດລ້ອມ, ເຕັກໂນໂລຊີ ແລະ ອຸດສາຫະກຳ. ນະໂຍບາຍຂອງສາຂາແມ່ນເພື່ອຄວບຄຸມຄວາມສ່ຽງທຸລະກິດຜ່ານຂັ້ນຕອນ ແລະ ແຜນຍຸດທະສາດຂອງສາຂາ.

*ໂຄງສ້າງການບໍລິຫານຄວາມສ່ຽງ*

ຄະນະບໍລິຫານແມ່ນມີຄວາມຮັບຜິດຊອບສຳລັບການບໍລິຫານຄວາມສ່ຽງໂດຍລວມ ແລະ ສຳລັບການອະນຸມັດ ຫລັກການ ແລະ ຍຸດທະສາດໃນການບໍລິຫານຄວາມສ່ຽງ.

ສະພາໄດ້ແຕ່ງຕັ້ງພະນັກງານຮັບຜິດຊອບບໍລິຫານຄວາມສ່ຽງ ເຊິ່ງຮັບຜິດຊອບກ່ຽວກັບການຄວບຄຸມການຈັດການຄວາມສ່ຽງໂດຍລວມຂອງສາຂາ .

ຄະນະກຳມະການບໍລິຫານຊັບສິນ ແລະ ໜີ້ສິນ ມີຄວາມຮັບຜິດຊອບໃນການພັດທະນາກົນລະຍຸດ ແລະ ຫລັກການໂດຍລວມ, ຂອບເຂດວຽກ, ນະໂຍບາຍ ແລະ ຂອບເຂດ ,ພະແນກປະຕິບັດຕາມ ແລະ ຄວາມສ່ຽງ ແມ່ນຮັບຜິດຊອບໃນການຕັດສິນໃຈ ແລະ ຄວບຄຸມຄວາມສ່ຽງ ແລະ ລາຍງານໃຫ້ສະພາບໍລິຫານຮັບຮູ້.

ນະໂຍບາຍຂອງສາຂາແມ່ນຂັ້ນຕອນການບໍລິຫານຄວາມສ່ຽງຂອງສາຂາ ເຊິ່ງຖືກກວດກາທຸກໆປີໂດຍພາກສ່ວນກວດກາພາຍໃນເຊິ່ງຈະກວດກາທັງຄວາມພຽງພໍຂອງຂັ້ນຕອນ ແລະ ການປະຕິບັດຕາມຂັ້ນຕອນທີ່ວາງອອກ .ກວດກາພາຍໃນຈະປຶກສາຜົນການກວດກາຄະນະບໍລິຫານ, ແລະ ລາຍງານສິ່ງທີ່ພົບເຫັນ ແລະ ຄຳແນະນຳໃຫ້ຄະນະກຳມະການກວດກາຂອງທະນາຄານ ແຫ່ງປະເທດຈີນ.

## 24. ຄວາມສ່ຽງດ້ານອັດຕາດອກເບ້ຍ

ຄວາມສ່ຽງດ້ານອັດຕາດອກເບ້ຍເກີດຂຶ້ນຈາກການປ່ຽນແປງອັດຕາດອກເບ້ຍເຊິ່ງກະທົບຕໍ່ກຳໄລໃນອານາຄົດ ຫລື ມູນຄ່າຍຸດຕິທຳຂອງເຄື່ອງມືທາງການເງິນ .ສາຂາໄດ້ປະເຊີນກັບຄວາມສ່ຽງດ້ານອັດຕາດອກເບ້ຍເຊິ່ງເປັນຜົນຂອງຄວາມບໍ່ສອດຄ່ອງຂອງການຕັ້ງອັດຕາດອກເບ້ຍຄືນໃໝ່ຂອງຊັບສິນ ແລະ ໜີ້ສິນ ໂດຍຜ່ານຍຸດທະສາດການຄຸ້ມຄອງຄວາມສ່ຽງຍ້ອນ, ລັກສະນະການລົງບັນຊີຂອງສາຂາ, ສາຂາບໍ່ສາມາດວິເຄາະຜົນກະທົບຂອງຄວາມສ່ຽງດ້ານອັດຕາດອກເບ້ຍ.

## 25. ຄວາມສ່ຽງດ້ານເງິນຕາ

ຄວາມສ່ຽງດ້ານເງິນຕາ ເກີດຈາກອັດຕາແລກປ່ຽນເງິນຕາຕ່າງປະເທດມີການປ່ຽນແປງເຊິ່ງຈະກະທົບໃສ່ຖານະເງິນຕາຕ່າງປະເທດຂອງສາຂາ .ສາຂາໄດ້ກຳນົດເພດານຂອງຖານະເງິນຕາແຕ່ລະຊະນິດພາຍໃຕ້ລະບົບການປະເມີນການຄວບຄຸມຄວາມສ່ຽງພາຍໃນ ແລະ ຂໍ້ກຳນົດຂອງທະນາຄານແຫ່ງ ສປປ ລາວ .ແຕ່ລະຖານະແມ່ນໄດ້ຖືກຕິດຕາມກວດກາທຸກໆມື້ເພື່ອຮັບປະກັນໃຫ້ຖານະເງິນຕາຖືກຮັກສາໄວ້ຢູ່ໃນຂອບເຂດຂອງເພດານທີ່ໄດ້ສ້າງຂຶ້ນ .

## 25. ຄວາມສ່ຽງດ້ານເງິນຕາ (ຕໍ່)

ລາຍລະອຽດຂອງຊັບສິນ ແລະ ໜີ້ສິນທີ່ຖືກປ່ຽນເປັນລ້ານກີບໃນວັນທີ 31 ທັນວາ 2015 ມີດັ່ງນີ້:

| | *ກີບ* | *ໂດລາ* | *ບາດ* | *ອື່ນໆ* | *ລວມ* |
|---|---|---|---|---|---|
| | | *ທຽບເທົ່າລ້ານ* | *ທຽບເທົ່າລ້ານ* | *ທຽບເທົ່າລ້ານ* | *ທຽບເທົ່າລ້ານ* |
| | *ລ້ານກີບ* | *ກີບ* | *ກີບ* | *ກີບ* | *ກີບ* |
| **ຊັບສິນ** | | | | | |
| ເງິນສົດ ແລະ ເງິນຝາກຢູ່ ທຫລ | 292,880 | 72,625 | 6,462 | 156 | 372,123 |
| ໜີ້ຕ້ອງຮັບຈາກທະນາຄານອື່ນ | - | 28,890 | 1,074 | 7,813 | 37,777 |
| ເງິນກູ້ໃຫ້ແກ່ລູກຄ້າ (*) | 49,165 | 48,994 | - | - | 98,159 |
| ຊັບສິນບັດ ແລະ ອຸປະກອນ | - | 411,325 | - | - | 411,325 |
| ຊັບສິນບັດບໍ່ມີຕົວຕົນ | 13,072 | - | - | - | 13,072 |
| ຊັບສິນອື່ນໆ | 19,669 | - | - | - | 19,669 |
| **ລວມຍອດຊັບສິນ** | **374,786** | **561,834** | **7,536** | **7,969** | **952,125** |
| **ໜີ້ສິນ ແລະ ທຶນ** | | | | | |
| **ໜີ້ສິນ** | | | | | |
| ໜີ້ຕ້ອງສົ່ງທະນາຄານອື່ນໆ | 30,000 | 408,778 | - | - | 438,778 |
| ໜີ້ຕ້ອງສົ່ງລູກຄ້າ | 5,367 | 52,261 | 7,548 | 7,954 | 73,130 |
| ໜີ້ສິນອື່ນໆ | 35,504 | 14,052 | - | - | 49,556 |
| **ລວມຍອດໜີ້ສິນ** | **70,871** | **475,091** | **7,548** | **7,954** | **561,464** |
| **ທຶນ** | **389,682** | **-** | **-** | **-** | **389,682** |
| **ລວມຍອດໜີ້ສິນ ແລະ ທຶນ** | **460,553** | **475,091** | **7,548** | **7,954** | **951,146** |
| **ມູນຄ່າສຸດທິທີ່ມີຄວາມສ່ຽງ** | **(85,767)** | **86,743** | **(12)** | **15** | **979** |

(*):*ລາຍການນີ້ບໍ່ລວມເງິນແຮ*

## 26. ການບໍລິຫານທຶນ

ສາຂາໄດ້ຮັກສາທຶນຕໍ່າສຸດຕາມລະບຽບຂອງທຶນໂດຍອີງຕາມລະບຽບການສະບັບເລກທີ 536/ກທຄສ/ທຫລ ລົງວັນທີ 14 ຕຸລາ 2009 ວ່າດ້ວຍຄວາມພຽງພໍຂອງທຶນ ແລະ ລາຍລະອຽດອື່ນໆຂອງສາຂາທະນາຄານທຸລະກິດ. ຈຸດປະສົງຕົ້ນຕໍຂອງການບໍລິຫານທຶນຂອງສາຂາແມ່ນເພື່ອຮັບປະກັນວ່າສາຂາ ໄດ້ປະຕິບັດຕາມຂໍ້ກໍານົດ ທາງດ້ານເງິນທຶນຂອງທະນາຄານກາງ. ສາຂາຮັບຮູ້ຄວາມຕ້ອງການຂອງສາຂາເພື່ອຮັກ ສາການບໍລິຫານຊັບສິນ ແລະ ໜີ້ສິນເພື່ອເຮັດໃຫ້ເກີດຄວາມສົມດຸນກັນລະຫວ່າງກໍາໄລ ແລະ ຄວາມ ພຽງພໍຂອງທຶນ.

ອີງຕາມລະບຽບການສະບັບເລກທີ 536/ກທຄສ/ທຫລ, ທຶນຕາມລະບຽບການຂອງສາຂາວິເຄາະເປັນ 2 ຊັ້ນຄື:

- ທຶນ ຊັ້ນ 1, ປະກອບດ້ວຍ ທຶນຈົດທະບຽນ, ຄັງສະສົມຕາມລະບຽບການ, ທຶນເພື່ອການຂະຫຍາຍທຸລະກິດ ແລະ ທຶນອື່ນໆ ແລະ ກໍາໄລ ສະສົມ;
- ທຶນ ຊັ້ນ 2, ປະກອບດ້ວຍໜີ້ສິນສໍາຮອງ, ຄັງແຮທົ່ວໄປ ແລະ ອີງປະກອບຂອງຄັງສະສົມມູນຄ່າຍຸດຕິທໍາ ທີ່ກ່ຽວຂ້ອງກັບກໍາໄລ ແລະ ຂາດທຶນກ່ຽວກັບເຄື່ອງມືທີ່ໄດຈັດ ປະເພດທີ່ມີໄວ້ເພື່ອຂາຍ.

ຂອບເຂດຕ່າງໆແມ່ນຖືກນໍາໃຊ້ເພື່ອເປັນອີງປະກອບຂອງທຶນອີງໃສ່: ທຶນ ຊັ້ນ 2 ບໍ່ສາມາດຫຼາຍກວ່າທຶນ ຊັ້ນ 1 ໄດ້ ແລະ ໜີ້ສິນສໍາຮອງ ອາດຈະບໍ່ເກີນ 50% ຂອງທຶນລະດັບທີ 1.

ການວິເຄາະທຶນຂອງສາຂາແມ່ນອີງຕາມຂໍ້ມູນທາງການເງິນຈາກມາດຕະຖານສາກົນດ້ານການລາຍງານການເງິນດັ່ງຕໍ່ໄປນີ້:

| ລາຍການ | *31 ທັນວາ 2015*<br>*ຕາມ IFRS*<br>*ລ້ານກີບ* |
|---|---:|
| ທຶນ ຊັ້ນ 1 | 389,682 |
| ທຶນ ຊັ້ນ 2 | - |
| **ທຶນທັງໝົດ** | **389,682** |
| ຫັກຈາກທຶນ (ລົງທຶນໃນສິນເຊື່ອ ແລະ ສະຖາບັນການເງິນອື່ນໆ) | - |
| **ທຶນສໍາລັບການຄິດໄລ່ CAR (A)** | **389,682** |
| ນໍາໜັກຄວາມສ່ຽງຂອງລາຍການໃນໃບສະຫລຸບຊັບສິນບັດ | 89,141 |
| ນໍາໜັກຄວາມສ່ຽງຂອງລາຍການນອກໃບສະຫລຸບຊັບສິນບັດ | - |
| **ລວມນໍ້າໜັກຄວາມສ່ຽງຂອງຊັບສິນ (B)** | **89,141** |
| **ອັດຕາຄວາມພຽງພໍຂອງທຶນ (A/B)** | **437%** |

## 27. ມູນຄ່າຍຸຕິທໍາຂອງຊັບສິນ ແລະ ໜີ້ສິນທາງການເງິນ

ມູນຄ່າຍຸຕິທໍາໝາຍເຖິງມູນຄ່າຊັບສິນທີ່ສາມາດແລກປ່ຽນເປັນເງິນ ຫລື ການຊໍາລະໜີ້ສິນບົນພື້ນຖານລາຍການເຄື່ອນໄຫວໃນເງື່ອນໄຂແກ່ງແຍ້ງປົກກະຕິ. ເນື່ອງຈາກວ່າບໍ່ມີລາຄາສິນທຽບຂອງຕະຫຼາດ, ຊັບສິນ ແລະ ໜີ້ສິນຂອງສາຂາຈຶ່ງບໍ່ສາມາດປະເມີນລາຄາຕາມຕະຫຼາດໄດ້, ດັ່ງນັ້ນ, ມູນຄ່າຍຸຕິທໍາຈຶ່ງຖືກປະເມີນແບບສົມມຸດຕິຖານອີງຕາມລັກສະນະຂອງຊັບສິນ ແລະ ໜີ້ສິນ. ໃນຄໍາເຫັນຂອງຄະນະບໍລິຫານຂອງສາຂາ, ມູນຄ່າຍັງເຫລືອໃນບັນຊີຊັບສິນ ແລະ ໜີ້ ສິນການເງິນທີ່ລວມເຂົ້າໄວ້ໃນໃບສະຫລຸບຊັບສິນບັດເພື່ອການປະເມີນທີ່ສົມເຫດສົມຜົນຂອງລາຄາຍຸດຕິທໍາ. ໃນການປະເມີນນີ້, ຄະນະບໍລິຫານສົມມຸດຕິຖານວ່າເງິນກູ້ ແລະ ເງິນລ່ວງໜ້າສ່ວນໃຫຍ່ແມ່ນຖືຄອງຮອດມື້ຄົບກໍານົດເວລາຊໍາລະເງິນເຊິ່ງການຕີມູນຄ່າຍຸດຕິທໍາແມ່ນເທົ່າກັບມູນຄ່າທີ່ລົງບັນຊີຂອງເງິນກູ້ທີ່ຖືກດັດແກ້ ແລະ ເງິນອຸດໜູນສໍາລັບຄ່າເສື່ອມໜີ້ເສຍ.

## 28. ອັດຕາແລກປ່ຽນທີ່ນຳໃຊ້ກັບສະກຸນເງິນຕາຕ່າງປະເທດ ທຽບເທົ່າເງິນກີບລາວນະມື້ລາຍງານ

| | *31 ທັນວາ 2015* |
|---|---|
| | *ກີບ* |
| ໂດລາສະຫະລັດ ("USD") | 8,148 |
| ບາດໄທ ("THB") | 225.96 |
| ຢວນຈີນ ("CNY") | 1,236 |

## 29. ເຫດການທີ່ເກີດຂຶ້ນພາຍຫຼັງມື້ປິດບັນຊີ

ນອກຈາກສິ່ງທີ່ໄດ້ເປີດເຜີຍໃນເອກະສານລາຍງານການເງິນສະບັບນີ້, ນະມື້ສ້າງເອກະສານລາຍງານ, ບໍ່ມີເຫດການໃດເກີດຂຶ້ນຫລັງຈາກວັນ ທີ 31 ທັນວາ 2015 ທີ່ມີຜົນກະທົບທີ່ມີຜົນກະທົບອັນໃຫຍ່ຫຼວງຕໍ່ຖານະການເງິນຂອງສາຂາ ນະວັນທີ 31 ທັນວາ 2015.

ກະກຽມໂດຍ:

ທ່ານ Li Zhiwei
ຜູ້ຈັດການບໍລິຫານການເງິນ ແລະ ໜ່ວຍບໍລິການການດຳເນີນງານ

ອະນຸມັດໂດຍ:

ທ່ານ Li Zhiyong
ຜູ້ຈັດການທົ່ວໄປ

ນະຄອນຫຼວງວຽງຈັນ, ສປປ ລາວ

31 ມີນາ 2016